# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

24 ກຸມພາ - 02 ມີນາ 2023
ປີທີ 12
ສະບັບທີ 911
ລາຍສັປປະດາ


## ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ເຂົ້າຢ້ຽມຂ່ຳນັບປະທານສະພາແຫ່ງຊາດ



(ສພຊ) ວັນທີ 22 ກຸມພາ 2023 ທີ່ສະພາແຫ່ງຊາດ ນະຄອນຫຼວງວຽງຈັນ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງສະຫາຍ ເລ ຮວາຍ ຈຸງ ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ພ້ອມດ້ວຍຄະນະ ໃນໂອກາດເຄື່ອນໄຫວເຮັດວຽກຢູ່ ສປປລາວ ໃນລະຫວ່າງວັນທີ 21-22 ກຸມພາ 2023.

ໂອກາດນີ້, ສະຫາຍປະທານສະພາແຫ່ງຊາດ ໄດ້ກ່າວສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ພ້ອມທັງຕີລາຄາສູງຕໍ່ການຢ້ຽມຢາມ ສປປລາວຂອງສະຫາຍ ເລ ຮວາຍ ຈຸງ ແລະ ຄະນະ ເຊິ່ງເປັນການປະກອບສ່ວນເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໃຫ້ເຂົ້າສູ່ລວງເລິກ ໃນທຸກຂົງເຂດວຽກງານ ຢ່າງບໍ່ຢຸດຢັ້ງ ແລະ ນຳເອົາຜົນປະໂຫຍດຕົວຈິງ ມາສູ່ປະຊາຊົນສອງຊາດນັບມື້ນັບຫຼາຍຂຶ້ນ. ສະແດງຄວາມຊົມເຊີຍຜົນສຳເລັດອັນໃຫຍ່ຫຼວງ ແລະ ຮອບດ້ານ ທີ່ພັກ, ລັດ ແລະ ປະຊາຊົນຫວຽດນາມ ອ້າຍນ້ອງ ຍາດມາໄດ້ ພາຍໃຕ້ການນຳພາອັນ

ອ່ານຕໍ່ໜ້າ 4

## ມະຫະກຳບຸນຊ້າງແຂວງໄຊຍະບູລີ ປີ 2023 ໄດ້ຈັດຂຶ້ນຢ່າງຄຶກຄື້ນ



ອ່ານຕໍ່ໜ້າ 2

## ກຳມາທິການກົດໝາຍປຶກສາຫາລືວຽກງານກົດໝາຍ



(ສພຊ) ເພື່ອສະຫຼຸບການຈັດຕັ້ງປະຕິບັດວຽກງານສ້າງ ແລະ ປັບປຸງກົດໝາຍ ໃນໄລຍະຜ່ານມາ ພ້ອມທັງປຶກສາຫາລືແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025 ຂອງສະພາແຫ່ງຊາດຊຸດທີ IX, ແຜນການສ້າງ ແລະ

ອ່ານຕໍ່ໜ້າ 4

## ຮອງປະທານສະພາແຫ່ງຊາດ ຕິດຕາມກວດກາ ແລະ ຊຸກຍູ້ວຽກງານ ຢູ່ແຂວງຄຳມ່ວນ



ອ່ານຕໍ່ໜ້າ 4

## ເຜີຍແຜ່ເອກະສານສຳຄັນຂອງພັກ ແລະ ປາຖະກະຖາ ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 74 ປີ



(ສພຊ) ໃນວັນທີ 23 ກຸມພາ 2023 ທີ່ຫໍສະພາແຫ່ງຊາດ ນະຄອນຫຼວງວຽງຈັນ, ໄດ້ຈັດກອງປະຊຸມເຜີຍ ແຜ່ເອກະສານຜັນຂະຫຍາຍຜົນສຳເລັດການຢ້ຽມຢາມລັດຖະກິດຂອງສະຫາຍເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປ ລາວ ຢູ່ ສປ ຈີນ; ເຜີຍແຜ່ຄຳສັ່ງຂອງຄະນະເລຂາທິການສູນກາງພັກ, ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ກ່ຽວກັບການດຳເນີນກອງປະຊຸມກາງສະໄໝຂອງຄະນະບໍລິຫານງານພັກແຕ່ລະຂັ້ນ ແລະ ຮັບຟັງປາຖະກະຖາວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 74 ປີ (20/1/1949-20/1/2023) ໂດຍການເປັນປະທານຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ, ໂດຍການເຂົ້າຮ່ວມຂອງສະຫາຍ

ອ່ານໜ້າ 3

## ສຳເລັດການເຄື່ອນໄຫວຢ້ຽມຢາມ ແລະ ພົບປະປະຊາຊົນ ຢູ່ແຂວງຈຳປາສັກ

(ສພຊ) ໃນລະຫວ່າງວັນທີ 6-8 ກຸມພາທີ່ຜ່ານມາ, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ສົມທົບກັບທ່ານ ນາງ ບຸນມີ ຈຸນລະຈັກ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ແລະ ທ່ານ ສົມສີ ມະນີນິນ ຮອງປະທານຄະນະປະຈຳສະພາປະຊາຊົນ

ອ່ານຕໍ່ໜ້າ 8





ສະພາປະຊາຊົນແຂວງຜົ້ງສາລີ...

ອ່ານຕໍ່ໜ້າ 5



ກອງປະຊຸມປະຈຳປີ 2022 ...

ອ່ານຕໍ່ໜ້າ 6



ເຄື່ອນໄຫວຢ້ຽມຢາມ...

ອ່ານຕໍ່ໜ້າ 7

# ປະທານກຳມາທິການການຕ່າງປະເທດ ຕ້ອນຮັບຄະນະຜູ້ແທນເຢຍລະມັນ

(ສພຊ) ໃນວັນທີ 20 ກຸມພາ 2023 ທີ່ຫໍສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ແລະ ທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ແຫ່ງ ສປປ ລາວ ພົບປະສອງຝ່າຍກັບທ່ານນາງ ເກບບຣິເລ ກາສມາເລັກ (Gabriele KATZMAREK) ສະມາຊິກສະພາແຫ່ງຊາດ, ປະທານກຸ່ມລັດຖະສະພາອາຊຽນ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ໃນລະຫວ່າງວັນທີ 19-21 ກຸມພາ 2022.



ໃນການພົບປະຄັ້ງນີ້, ທ່ານ ສັນຍາ ປຣະເສີດ ໄດ້ສະແດງຄວາມຍິນດີຕ້ອນຮັບທ່ານນາງ ເກບບຣິເລ ກາສມາເລັກ ພ້ອມດ້ວຍຄະນະ ແລະ ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີ ລະຫວ່າງ ສອງປະເທດລາວ ແລະ ເຢຍລະມັນ ເວົ້າລວມ, ເວົ້າສະເພາະ ແມ່ນສອງອົງການນິຕິບັນຍັດ; ຈາກນັ້ນ, ທ່ານ ນາງ ເກບບຣິເລ ກາສມາເລັກ ໄດ້ສະແດງຄວາມພາກພູມໃຈທີ່ໄດ້ມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປລາວ, ໄດ້ແຈ້ງໃຫ້ຊາບຈຸດປະສົງຂອງການມາເຮັດວຽກໃນຄັ້ງນີ້ ແລະ ໄດ້ຍົກໃຫ້ເຫັນຜົນສຳເລັດການຮ່ວມມື ລະຫວ່າງ ສອງປະເທດ ລາວ-ເຢຍລະມັນ ໃນໄລຍະຜ່ານມາ ເປັນຕົ້ນ: ການພັດທະນາຊົນນະບົດ, ການກໍ່ສ້າງພື້ນຖານໂຄງລ່າງ, ວຽກງານອາຊີວະສຶກສາ, ການອະນຸລັກສິ່ງແວດລ້ອມ, ການພັດທະນາເສດຖະກິດແບບຍືນຍົງ ແລະ ການສົ່ງເສີມພາກທຸລະກິດ-ເອກະຊົນເຊິ່ງເປັນການປະກອບສ່ວນອັນສຳຄັນໃນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປລາວ.

ໃນໂອກາດນີ້, ທ່ານປະທານກຳມາທິການການຕ່າງປະເທດ ໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມື ສະພາແຫ່ງຊາດລາວ ແລະ ລັດຖະສະພາເຢຍລະມັນ ທີ່ໄດ້ຮັບການພັດທະນາຢ່າງປົກກະຕິ ແລະ ຕໍ່ເນື່ອງ ເຊິ່ງສະແດງອອກໃນການແລກປ່ຽນການຢ້ຽມຢາມ ຂອງຄະນະຜູ້ແທນນຳກັນຢ່າງເປັນປົກກະຕິ. ພ້ອມດຽວກັນນີ້, ທ່ານປະທານກຳມາທິການການຕ່າງປະເທດ ໄດ້ແຈ້ງໃຫ້ຊາບກ່ຽວກັບສະພາບພົ້ນເດັ່ນ ຂອງ ສປປລາວ ແລະ ການເຄື່ອນໄຫວໂດຍຫຍໍ້ຂອງສະພາແຫ່ງຊາດລາວ ໃຫ້ຝ່າຍເຢຍລະມັນຮັບຊາບ. ສອງຝ່າຍໄດ້ປຶກສາຫາລື ແລະ ຊອກຫາວິທີທາງເພື່ອເຮັດໃຫ້ສອງປະເທດສືບຕໍ່ແລກປ່ຽນຄະນະຜູ້ແທນໃນຕໍ່ໜ້າ ແລະ ຊຸກຍູ້ການຮ່ວມມືໃນຂົງເຂດເສດຖະກິດ, ການຄ້າ, ການລົງທຶນ ແລະ ອື່ນໆຂອງສອງປະເທດໃຫ້ຫຼາຍຂຶ້ນກວ່າເກົ່າ. ນອກຈາກນີ້, ສອງຝ່າຍຍັງແລກປ່ຽນຄຳຄິດຄຳເຫັນກ່ຽວກັບການເສີມຂະຫຍາຍການພົວພັນຮ່ວມມື ລະຫວ່າງ ສອງອົງການນິຕິບັນຍັດຂອງສອງປະເທດ ໂດຍສະເພາະການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນ, ການແລກປ່ຽນຂໍ້ມູນ-ຂ່າວສານກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ ແລະ ການຮ່ວມມື ແລະ ສະໜັບສະໜູນ ເຊິ່ງກັນແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ. ການພົບປະສອງຝ່າຍໄດ້ດຳເນີນໄປດ້ວຍບັນຍາກາດທີ່ສະໜິດສະໜົມ ແລະ ກົງໄປກົງມາ ເຊິ່ງເປັນການເສີມສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືຂອງສອງປະເທດໃຫ້ແໜ້ນແຟ້ນຂຶ້ນ.

ນອກຈາກການພົບປະເຮັດວຽກຢູ່ສະພາແຫ່ງຊາດແລ້ວ, ຄະນະຜູ້ແທນ ຍັງໄດ້ພົບປະເຮັດວຽກນຳທ່ານເຈົ້າແຂວງແຂວງຫຼວງພະບາງ ແລະ ຢ້ຽມຢາມສະຖານທີ່ທ່ອງທ່ຽວວັດທະນະທຳຈຳນວນໜຶ່ງຢູ່ນະຄອນຫຼວງວຽງຈັນ ແລະ ແຂວງຫຼວງພະບາງ.

# ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳ ໃຕ້ກົດໝາຍ



(ສພຊ) ເພື່ອເປັນການຢ້ຽມຢາມ, ແລກປ່ຽນຄຳເຫັນ ແລະ ທັດສະນະກ່ຽວກັບການພັດທະນານິຄົມໃນໄລຍະໃໝ່; ລົງເກັບກຳຂໍ້ມູນຕົວຈິງກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍຂອງຂະແໜງການທີ່ກ່ຽວຂ້ອງ ແລະ ຫົວໜ່ວຍທຸລະກິດຕ່າງໆຢູ່ເຂດນິຄົມອຸດສາຫະກຳ ແລະ ການຄ້າວຽງຈັນ-ໂນນທອງ; ຕິດຕາມຊຸກຍູ້ແກ້ໄຂຄວາມຫຍຸ້ງຍາກໃນການນຳເຂົ້າ-ອອກສິນຄ້າຂອງຫົວໜ່ວຍການຜະລິດ ກໍຄືຢູ່ໃນຂອບເຂດນິຄົມອຸດສາຫະກຳ ແລະ ການຄ້າດັ່ງກ່າວ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ມີປະສິດທິພາບ ແລະ ເພື່ອເປັນຂໍ້ມູນ ແລະ ບ່ອນອີງລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ; ໃນວັນທີ 17 ກຸມພາ 2023, ທ່ານ ຮສ. ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ຢ້ຽມຢາມນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ VITA park ໂດຍໄດ້ຮັບການຕ້ອນຮັບຈາກທ່ານ ເສີນ ຊີເສີນ ຜູ້ອຳນວຍການບໍລິສັດລາວວິຕາພັດທະນາຈຳກັດ ພ້ອມດ້ວຍຄະນະ.

ໂອກາດດັ່ງກ່າວ, ຄະນະໄດ້ຮັບຟັງການນຳສະເໜີກ່ຽວກັບການພັດທະນານິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ ໃນໄລຍະຜ່ານມາຈົນເຖິງປັດຈຸບັນ; ລາຍງານແຜນການພັດທະນານິຄົມໃນໄລຍະໃໝ່ ແລະ ບັນຫາຂໍ້ຫຍຸ້ງຍາກໃນການພັດທະນານິຄົມ ແລະ ສົນທະນາແລກປ່ຽນຄຳເຫັນລະຫວ່າງຄະນະຜູ້ແທນ, ຫ້ອງການຄຸ້ມຄອງບໍລິຫານນິຄົມ ແລະ ບໍລິສັດລາວວິຕາພັດທະນາຈຳກັດ; ຈາກນັ້ນ, ທ່ານປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ກໍໄດ້ມີຄຳເຫັນໂອ້ລົມໃຫ້ທິດຊີ້ນຳ ພ້ອມທັງຢ້ຽມຢາມໂຮງງານຜະລິດຫົວອາຫານສັດ.

(ສອນສັກ ວັນວິໄຊ)

## ມະຫະກຳບຸນຊ້າງ...

(ຕໍ່ຈາກໜ້າ 1)

(ສພຊ) ງານມະຫະກຳບຸນຊ້າງ ແຂວງໄຊຍະບູລີ ຄັ້ງທີ 16 ໄດ້ເປີດຂຶ້ນຢ່າງເປັນທາງການ ໃນຕອນເຊົ້າວັນທີ 18 ກຸມພາ 2023 ຜ່ານມາ ທີ່ເດີ່ນສະໜາມຫຼວງຂອງແຂວງໄຊຍະບູລີ ເຊິ່ງມີຊ້າງເຂົ້າຮ່ວມ 75 ເຊືອກ ໂດຍໃຫ້ກຽດເຂົ້າຮ່ວມຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ພ້ອມດ້ວຍພັນລະຍາ, ທ່ານ ພົງສະຫວັນ ສິດທະວົງ ເຈົ້າແຂວງໄຊຍະບູລີ ພ້ອມພັນລະຍາ, ມີການນຳພັກ-ລັດ, ທັງສູນກາງ ແລະ ແຂວງ, ແຂກພາຍໃນ, ຕ່າງແຂວງ ແລະ ຕ່າງປະເທດ ພ້ອມດ້ວຍມວນຊົນຊາວແຂວງໄຊຍະບູລີ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ໃນພິທີ, ທ່ານ ເພັດພິໄຊ ສູນວິໄລ ຮອງເຈົ້າແຂວງໄຊຍະບູລີ ປະທານຈັດງານມະຫະກຳບຸນຊ້າງແຂວງໄຊຍະບູລີ ໄດ້ຂຶ້ນກ່າວລາຍງານການກະກຽມຄວາມພ້ອມໃນການຈັດງານມະຫະກຳບຸນຊ້າງປະຈຳປີ 2023 ໂດຍກ່າວວ່າ: ງານມະຫະກຳບຸນຊ້າງໄຊຍະບູລີ ແມ່ນຈັດຂຶ້ນໃນເດືອນກຸມພາຂອງທຸກໆປີ ແຕ່ມາຮອດປີ 2020-2022 ໄດ້ຢຸດເຊົາ ຍ້ອນການລະບາດຂອງພະຍາດໂຄວິດ-19 ມາຮອດປີ 2023 ສະພາບການລະບາດຂອງພະຍາດໂຄວິດ-19 ໄດ້ຫຼຸດຜ່ອນລົງ ແລະ ພວກເຮົາໄດ້ມີການສັກວັກຊິນປ້ອງກັນ ຈຶ່ງໄດ້ຕົກລົງຈັດງານມະຫະກຳບຸນຊ້າງປະຈຳປີ 2023 ຂຶ້ນເປັນຄັ້ງທີ 16 ເຊິ່ງມີຊ້າງເຂົ້າຮ່ວມທັງໝົດ 75 ເຊືອກ ເພື່ອເປັນການອະນຸລັກຮັກສາຊ້າງລາວ ເພາະຊ້າງເປັນມູນມໍລະດົກຂອງຊາດ ທັງເປັນມິ່ງຂວັນຄູ່ບ້ານຄູ່ເມືອງ. ພ້ອມນີ້, ກໍເພື່ອເປັນການສືບຕໍ່ຮັກສາວັດທະນະທຳ, ຮີດຄອງປະເພນີອັນດີງາມ ແລະ ວິຖີການດຳລົງຊີວິດຂອງປະຊາຊົນບັນດາເຜົ່າຂອງແຂວງໄຊຍະບູລີທີ່ຕິດພັນກັບຊ້າງມາແຕ່ອະດີດຕະການ ໃຫ້ຍືນຍົງຄົງຕົວຄຽງຄູ່ກັບປະຊາຊົນເຮົາຕະຫຼອດໄປ; ທັງເປັນການສົ່ງເສີມກິດຈະກຳອະນຸລັກຊ້າງ ໃຫ້ຊ້າງຈຳນວນ 75 ເຊືອກທີ່ມາຈາກທົ່ວແຂວງ ໄດ້ພົບກັນປະສົມພັນກັນ ແລະ ກໍໃຫ້ເກີດການສືບພັນໃນອະນາຄົດ, ເປັນເວທີການສະແດງທັກສະຄວາມສາມາດໃນການຄວບຄຸມຊ້າງ ຕໍ່ສາທາລະນະຊົນ ແລະ ຍັງເປັນບ່ອນແລກປ່ຽນບົດຮຽນຂອງຄວນຊ້າງ ເພື່ອສືບທອດອາຊີບລ້ຽງຊ້າງໃຫ້ຄົງຢູ່ຄູ່ຄູ່ກັບປວງຊົນລາວ ກໍຄືຊາວແຂວງໄຊຍະບູລີຕະຫຼອດໄປ ພ້ອມທັງໃຫ້ປະຊາຊົນ, ນັກທ່ອງທ່ຽວ ໄດ້ເຫັນການດຳລົງຊີວິດຂອງຊ້າງ, ຮູ້ບຸນຄຸນ ແລະ ຖືຄວາມສຳຄັນຂອງຊ້າງທີ່ເຄີຍຢູ່ຄູ່ບ້ານຄູ່ເມືອງຕັ້ງແຕ່ອະດີດຈົນເຖິງປະຈູບັນ.

ສຳລັບກິດຈະກຳຫຼັກຂອງການຈັດງານໃນປີນີ້ ແມ່ນຈະເນັ້ນໜັກກິດຈະກຳທີ່ຕິດພັນກັບຊ້າງ ແລະ ການອະນຸລັກຊ້າງ ໂດຍສະເພາະການສະແດງຂອງຊ້າງຄຳຮູ້ ແລະ ໃນແຕ່ລະວັນຂອງໄລຍະການຈັດງານ ແມ່ນຈະຈັດໃຫ້ມີກິດຈະກຳຫຼາກຫຼາຍສີສັນ ເປັນຕົ້ນການຈັດວາງສະແດງສິນຄ້າຕະຫຼາດນັດເລີ່ມແຕ່ວັນທີ 13 ກຸມພາ 2023 ເປັນຕົ້ນມາ ມີສິນຄ້າໜຶ່ງເມືອງ ໜຶ່ງຜະລິດຕະພັນ, ສິນຄ້າຜົນຜະລິດທາງດ້ານກະສິກຳ, ຫັດຖະກຳ ແລະ ອຸດສາຫະກຳປຸງແຕ່ງທີ່ເປັນທ່າແຮງ ແລະ ຜົນງານຂອງບັນດາ 11 ເມືອງ ພາຍໃນແຂວງໄຊຍະບູລີ, ມີສິນຄ້ານະວັດຕະກຳທີ່ຕິດພັນທາງດ້ານວິຊາການຂອງບາງພະແນກການຂອງແຂວງໄຊຍະບູລີ, ຫົວໜ່ວຍທຸລະກິດຂອງພາກລັດ, ເອກະຊົນທັງພາຍໃນ ແລະ ຕ່າງປະເທດ ແລະ ຕົວແທນຂອງຊາວບ້ານເຂົ້າຮ່ວມຈຳນວນ 280 ກວ່າຮ້ານ ເຊິ່ງມີມູນຄ່າສິນຄ້າປະມານ 8 ຕື້ກີບກວ່າ, ມີພິທີຕັກບາດຖວາຍສັງຄະທານຕາມຮີດຄອງປະເພນີໃນວັນທີ 17 ກຸມພາ 2023 ສຳລັບມື້ເປີດງານເປັນທາງການມື້ນີ້ຈະມີກິດຈະກຳຄື: ຂະບວນແຫ່ຂອງຊ້າງຈຳນວນ 75 ເຊືອກ ປະສານສຽງເປົ່າສະໄນ, ຂະບວນແຫ່ກ້ອນກຳລັງຂອງ 11 ເມືອງ ທີ່ມີເອກະລັກຂອງຊົນເຜົ່າ, ຂະບວນສະແດງຂອງ 8 ເຜົ່າ ທີ່ເປັນເອກະລັກ ຈຳນວນ 80 ຄົນ, ການສະແດງຂອງກ້ອນກຳລັງນັກຮຽນ-ນັກສຶກສາ ຈຳນວນ 1400 ຄົນ, ຊົມການສະແດງກິດຈະກຳຂອງຊ້າງຄຳຮູ້ ຈຳນວນ 25 ເຊືອກ ລວມ 19 ລາຍການ, ຈັດພິທີບາສີສູ່ຂວັນຊ້າງ.

ຫຼັງຈາກເປີດພິທີເປັນທາງການແລ້ວ ແຕ່ລະມື້ຈະມີການເປີດໃຫ້ແຂກໄດ້ມາຊົມການສະແດງຂອງຊ້າງຄຳຮູ້, ບໍລິການຂີ່ຊ້າງ, ທ່ຽວຊົມຕະຫຼາດນັດວາງສະແດງສິນຄ້າ ແລະ ຊົມການສະແດງສິລະປະວັນນະຄະດີຂອງອ້ອມຂ້າງແຂວງ ແລະ ເມືອງ ການທ່ອງທ່ຽວພາຍໃນເທດສະບານແຂວງຕາມສະຖານທີ່ທ່ອງທ່ຽວຕ່າງໆ.

ທ່ານ ພົງສະຫວັນ ສິດທະວົງ ເຈົ້າແຂວງໄຊຍະບູລີ ໄດ້ກ່າວເປີດງານມະຫະກຳບຸນຊ້າງ ປະຈຳປີ 2023 ຢ່າງເປັນທາງການ ພ້ອມທັງເຊີນການນຳຂັ້ນສູງ ແລະ ຄະນະຮ່ວມລັ່ນຄອງ 9 ບາດ ຕັດແຖບຜ້າເປີດງານມະຫະກຳບຸນຊ້າງ ແລະຂະບວນກ້ອນກຳລັງຕ່າງໆ ເຊັ່ນ: ຂະບວນປ້າຍໂລໂກບຸນຊ້າງ, ຂະບວນປ້າຍງານມະຫະກຳບຸນຊ້າງປະຈຳປີ 2023, ຂະບວນທຸງຊາດທຸງທິວ, ຂະບວນພາຂວັນຊ້າງ, ເຖົ້າແກ່ແນວໂຮມ ຈຳນວນ 50 ຄົນ, ຂະບວນຕາງໜ້າ 8 ເຜົ່າ ຈຳນວນ 80 ຄົນ, ຂະບວນແຫ່ຊ້າງ 75 ເຊືອກ ປະສານສຽງເປົ່າສະໄນ, ຊ້າງຈັບປ້າຍຄຳຂວັນຍິນດີຕ້ອນຮັບສູ່ງານມະຫະກຳບຸນຊ້າງປະຈຳປີ2023, ຂະບວນຊ້າງເສິກ, ຂະບວນຊ້າງທ່ອງທ່ຽວ, ຂະບວນຊ້າງລຳລຽງ, ຂະບວນລຳລຽງອາຫານການກິນ, ຂະບວນແຫ່ຂອງ 11 ເມືອງ, ຊົມການສະແດງ ຂອງນັກສະແດງເປັນຮູບທຸງ, ຮູບຊ້າງ ແລະ ຟ້ອນບັດສະລ່ອບ, ຊົມການສະແດງກິດຈະກຳຊ້າງຄຳຮູ້ມີ 19 ລາຍການ ບາສີສູ່ຂວັນຊ້າງ, ຊົມການສະແດງໂດດຈ້ອງ ແລະ ຈັດກິດຈະກຳອານຸລັກແຊ່ງຂັນແຕ້ມຮູບ ແລະ ຕີກ່ອບຢູ່ທີ່ສະໜາມກ່ອບຊ້າງນ້ອຍຕື່ມອີກ.

ວັນທີ 17 ກຸມພາ 2023 ທີ່ສະໜາມຫຼວງແຂວງໄຊຍະບູລີ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ພ້ອມດ້ວຍພັນລະຍາ, ທ່ານ ພົງສະຫວັນ ສິດທະວົງ ເລຂາພັກແຂວງເຈົ້າແຂວງໄຊຍະບູລີ, ມີການນຳພັກ-ລັດຂັ້ນສູນກາງ, ຂັ້ນແຂວງ ແລະ ເມືອງ ພ້ອມດ້ວຍພໍ່ແມ່ປະຊາຊົນຊາວແຂວງໄຊຍະບູລີ ຍັງໄດ້ຮ່ວມຕັກບາດໃນງານມະຫະກຳບຸນຊ້າງແຂວງໄຊຍະບູລີ ຄັ້ງທີ 16 ເຊິ່ງກິດຈະກຳຕັກບາດໃນງານມະຫະກຳບຸນຊ້າງໃນແຕ່ລະປີ ແມ່ນເປັນກິດຈະກຳໜຶ່ງທີ່ສຳຄັນກ່ອນມື້ພິທີເປີດງານຢ່າງເປັນທາງການ ເພື່ອສະແດງເຖິງຄວາມຜູກພັນ, ຄວາມຮູ້ບຸນຄຸນຕໍ່ຊ້າງ ທີ່ພວກເຮົາກໍຄືບັນພະບູລຸດໄດ້ນຳໃຊ້ແຮງຊ້າງເຂົ້າໃນການຕໍ່ສູ້ກູ້ຊາດໃນເມື່ອກ່ອນ ແລະ ການນຳໃຊ້ແຮງງານຊ້າງເຂົ້າໃນການລາກແກ່ສິ່ງຂອງຕ່າງໆ ເຂົ້າໃນການດຳລົງຊີວິດປະຈຳວັນໃນໄລຍະເວລາຜ່ານມາ.

# ຜົນສຳເລັດການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023

ຕໍ່ຈາກສະບັບກ່ອນ...

1.3 ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໃນຖານະທີ່ເປັນກົງຈັກຂອງຄະນະປະຈຳສະພາແຫ່ງຊາດ ທີ່ປະຕິບັດວຽກງານຂອງສະພາແຫ່ງຊາດ ຢູ່ເຂດເລືອກຕັ້ງ ກໍໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານດ້ວຍຄວາມຮັບຜິດຊອບສູງ ເຊັ່ນ: ການນຳເອົາຮ່າງກົດໝາຍ ລົງໄປທາບທາມປະຊາຊົນ, ສະຫຼຸບ-ສັງລວມ, ລາຍງານຄະນະປະຈຳສະພາແຫ່ງຊາດ; ສົມທົບກັບສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າພິຈາລະນາ, ຮັບຮອງເອົານິຕິກຳທີ່ສຳຄັນຂອງທ້ອງຖິ່ນ ໄດ້ທັງໝົດ 38 ສະບັບ, ໃນນີ້ ສ້າງໃໝ່ 28 ສະບັບ ແລະ ປັບປຸງ 10 ສະບັບ; ການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ສະແດງອອກການເຂົ້າຮ່ວມພິຈາລະນາຮັບຮອງເອົາບັນຫາສຳຄັນຂອງທ້ອງຖິ່ນ ຢູ່ກອງປະຊຸມສະ ໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນຂັ້ນແຂວງ ຊຸດທີ II ແລະ ກອງປະຊຸມປະຈຳເດືອນ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ. ນອກຈາກການຕິດຕາມກວດກາໃນກອງປະຊຸມສະພາປະຊາຊົນຂັ້ນແຂວງແລ້ວ ຍັງໄດ້ຕິດຕາມຮ່ວມກັບຄະນະສະເພາະກິດຕ່າງໆ ຂອງສະພາແຫ່ງຊາດ; ການເກັບກຳຄຳຄິດເຫັນຂອງປະຊາຊົນລາວບັນດາເຜົ່າ ເພື່ອສະເໜີໃຫ້ບັນດາພະແນກການ ແລະ ອົງການກ່ຽວຂ້ອງຂອງຂັ້ນທ້ອງຖິ່ນ ຂຶ້ນລາຍງານ, ຊີ້ແຈງ ແລະ ຕອບຄຳຊັກຖາມ;

1.4 ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໄດ້ຮ່ວມກັບຄະນະເລຂາທິການສະພາແຫ່ງຊາດ ແລະ ກຳມາທິການກ່ຽວຂ້ອງ ປະສານສົມທົບ ກັບສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າປັບປຸງກົງຈັກເສນາທິການຂັ້ນຂະແໜງການຊ່ວຍວຽກ ໃຫ້ສອດຄ່ອງກັບສະພາບຈຸດພິເສດຂອງຕົນ ແລະ ຮັບປະກັນການປະຕິບັດໜ້າທີ່ວຽກງານ. ມາຮອດປັດຈຸບັນ ໄດ້ສຳເລັດພື້ນຖານໃນການສ້າງຕັ້ງຂະແໜງການຊ່ວຍວຽກ ເຊິ່ງ 10 ແຂວງ ມີ 10 ຂະແໜງ; 4 ແຂວງ ມີ 9 ຂະແໜງ; 3 ແຂວງ ມີ 7 ຂະແໜງ ແລະ 1 ແຂວງ ມີ 6 ຂະແໜງ; ສຳເລັດການສ້າງຕັ້ງໜ່ວຍງານຊ່ວຍວຽກ ປະຈຳເຂດເລືອກຕັ້ງຢູ່ເມືອງ ມີ 3 ແຂວງ ແລະ ຍັງ 15 ແຂວງ ພວມສືບຕໍ່ຄົ້ນຄວ້າການສ້າງຕັ້ງໜ່ວຍງານຊ່ວຍວຽກດັ່ງກ່າວ.

6. ດ້ານການເຄື່ອນໄຫວວຽກງານຕ່າງປະເທດ

ຄະນະປະຈຳສະພາແຫ່ງຊາດ ໄດ້ເຄື່ອນໄຫວວຽກງານການຕ່າງປະເທດຂອງຕົນ ສອດຄ່ອງຕາມແນວທາງການຕ່າງປະເທດຂອງພັກ ດ້ວຍຄວາມເປັນເຈົ້າການ ແລະ ມີຜົນສຳເລັດເປັນຢ່າງດີ ເປັນຕົ້ນ ການລົງນາມບົດບັນທຶກການຮ່ວມມື (MOU) 7 ສະບັບ ລະຫວ່າງສະພາແຫ່ງຊາດລາວກັບ ສະພາແຫ່ງຊາດຫວຽດນາມ, ກຳປູເຈຍ ແລະ ລາຊະອານາຈັກໄທ; ຄົ້ນຄວ້າບົດບັນທຶກການຮ່ວມມື (MOU) 5 ສະບັບ ລະຫວ່າງສະພາປະຊາຊົນແຂວງຜົ້ງສາລີ, ແຂວງຫຼວງນ້ຳທາ, ແຂວງອຸດົມໄຊ, ແຂວງຫຼວງພະບາງ ຮ່ວມກັບສະພາປະຊາຊົນແຂວງຢູນນານ, ສປ ຈີນ; ລະຫວ່າງສະພາປະຊາຊົນແຂວງໄຊສົມບູນ ຮ່ວມກັບສະພາປະຊາຊົນແຂວງ ເຊີນລາ,

ອ່ານຕໍ່ສະບັບໜ້າ...

## ເຜີຍແຜ່...

(ຕໍ່ຈາກໜ້າ 1)

ພົນຈັດຕະວາ ຄຳຫອມ ແສງບົວລົມ ວິລະຊົນແຫ່ງຊາດ, ຮອງເລຂາຄະນະພັກ, ຮອງປະທານສະຫະພັນນັກຮົບເກົ່າແຫ່ງຊາດລາວ; ມີບັນດາສະຫາຍຄະນະບໍລິຫານງານພັກສະພາແຫ່ງຊາດ, ຄະນະພັກຮາກຖານ, ໜ່ວຍພັກຮາກຖານ, ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ, ສະມາຊິກພັກສົມບູນ ແລະ ສຳຮອງ ທົ່ວອົງຄະນະພັກເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມ ໄດ້ຮັບຟັງການປາຖະກະຖາວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 74 ປີ ໂດຍສະຫາຍ ພົນຈັດຕະວາ ຄຳຫອມ ແສງບົວລົມ ເຊິ່ງສະຫາຍ ໄດ້ທວນຄືນມູນເຊື້ອຄວາມອົງອາດກ້າຫານຂອງກອງທັບປະຊາຊົນລາວທີ່ສືບທອດມາຈາກກອງຮ້ອຍລາດຊະວົງ ໂດຍແມ່ນທ່ານປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາ ລົບຮັກຂອງປະຊາຊົນລາວບັນດາເຜົ່າ ເປັນຜູ້ກໍ່ຕັ້ງ ແລະ ໄດ້ຖະນຸຖະໜອມ, ບຳລຸງສ້າງຕະຫຼອດມາ ແລະ ໄດ້ເລົ່າເຖິງ ປະຫວັດການກຳເນີດຂອງກອງທັບປະຊາຊົນລາວ, ຜົນງານ, ໄຊຊະນະ ແລະ ການເຕີບໃຫຍ່ຂະຫຍາຍຕົວໃນແຕ່ລະໄລຍະ ໂດຍສະເພາະໄລຍະດຳເນີນການປະຕິວັດຕໍ່ສູ້ປົດປ່ອຍຊາດ, ໄລຍະປະຕິບັດສອງໜ້າທີ່ຍຸດທະສາດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ຈາກນັ້ນ, ກອງປະຊຸມ ໄດ້ຮັບຟັງການເຜີຍແຜ່ມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍມາດຕະຖານ ພະນັກງານ-ນຳພາຄຸ້ມຄອງ ສະບັບເລກທີ 030/ກມສພ, ລົງວັນທີ 03 ມັງກອນ 2018; ເຜີຍແຜ່ຄຳສັ່ງຂອງຄະນະເລຂາທິການສູນກາງພັກ, ສະບັບເລກທີ 268/ຄລສພ, ລົງວັນທີ 20 ມັງກອນ 2023; ເຜີຍແຜ່ຄຳແນະນຳຂອງຄະ ນະຈັດຕັ້ງສູນກາງພັກ ສະບັບເລກທີ 25/ຄຈສພ, ລົງວັນທີ 24 ມັງກອນ 2023; ເຜີຍແຜ່ກົດລະບຽບຂອງພັກ ກ່ຽວກັບມາດຕະຖານຂອງສະມາຊິກພັກ, ຂໍ້ຫ້າມສຳລັບສະມາຊິກພັກ, ສິດ ແລະ ໜ້າທີ່ຂອງຄະນະພັກແຕ່ລະຂັ້ນ ເຊິ່ງເປັນເອກະສານທີ່ມີຄວາມສຳຄັນ ແລະ ເປັນບ່ອນອີງໃຫ້ແກ່ ຄະນະພັກ, ຄະນະປະຈຳສະພາແຫ່ງຊາດ, ບັນດາຮາກຖານພັກ, ບັນດາກົງຈັກເສນາທິການ ນຳໄປຜັນຂະຫຍາຍເຂົ້າໃນວຽກງານຕົວຈິງ ຂອງແຕ່ລະຂົງເຂດໄດ້ຮັບຜົນສຳເລັດ.

ຕອນທ້າຍຂອງກອງປະຊຸມ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ, ປະທານສະພາແຫ່ງຊາດ ໄດ້ມີຄຳເຫັນໂອ້ລົມ ເພື່ອໃຫ້ທິດຊີ້ນຳຕໍ່ກອງປະຊຸມ ເຊິ່ງສະຫາຍ ໄດ້ເນັ້ນ 7 ຂໍ້ດັ່ງນີ້:

1. ຄະນະບໍລິຫານງານພັກສະພາແຫ່ງຊາດ ທີ່ນຳພາຢູ່ແຕ່ລະຂົງເຂດ, ບັນດາຮາກຖານພັກ ຈະຕ້ອງໄດ້ເພີ່ມທະວີຄວາມເອົາໃຈໃສ່ໃນການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ມີຄວາມເຂົ້າໃຈຕໍ່ສະພາບການ, ມີຄວາມອົດທົນ, ມີຄວາມເປັນເອກະພາບຕໍ່ແນວທາງນະໂຍບາຍຂອງພັກ ແລະ ເປັນເຈົ້າການເຂົ້າຮ່ວມໃນການແກ້ໄຂບັນຫາຕ່າງໆ ໃຫ້ບັນລຸຜົນສຳເລັດ; ພ້ອມກັນນັ້ນ, ກໍຈະຕ້ອງໄດ້ເອົາໃຈໃສ່ປະຕິບັດມາດຕະການຕ່າງໆ ໃນສະພາບຫຍຸ້ງຍາກນີ້ ເປັນຕົ້ນ ການປະຢັດມັດທະຍັດ, ຊ່ວຍເຫຼືອເຊິ່ງກັນແລະກັນພາຍໃນພະນັກງານ-ລັດຖະກອນຂອງສະພາແຫ່ງຊາດ.



2. ເປັນເຈົ້າການນຳພາການຈັດຕັ້ງຜັນຂະຫຍາຍ ແຜນການເຄື່ອນໄຫວຂອງສະພາແຫ່ງຊາດ ປະຈຳປີ 2023 ເປັນແຜນການເຄື່ອນໄຫວຂອງແຕ່ລະພາກສ່ວນ, ນຳພາກົງຈັກເສນາທິການຈັດຕັ້ງປະຕິບັດລວມທັງການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເຮັດໃຫ້ວຽກງານຕ່າງໆ ໄດ້ຮັບຜົນສຳເລັດ ໂດຍສະເພາະການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍ ປະຈຳປີ 2023, ການກະກຽມດ້ານເນື້ອໃນຂອງກອງປະຊຸມສະໄໝສາມັນເທື່ອທີ 5, ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງຈະໄດ້ດຳເນີນການສະຫຼຸບຕີລາຄາການເຄື່ອນໄຫວວຽກງານກາງສະໄໝຂອງສະພາແຫ່ງຊາດ ແລະ ພາກສ່ວນຕ່າງໆ; ການເຄື່ອນໄຫວຕິດຕາມກວດກາໃຫ້ມີຈຸດສຸມ, ມີປະສິດທິຜົນ ແລະ ສາມາດແກ້ໄຂຜົນການຕິດ ຕາມກວດກາຢ່າງມີປະສິດທິພາບ.

3. ສືບຕໍ່ປັບປຸງ ບັນດາເອກະສານທີ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ພິຈາລະນາຮັບຮອງເອົາໃຫ້ສຳເລັດ. ເພື່ອຮັບປະກັນວຽກງານດັ່ງກ່າວ ສະເໜີໃຫ້ທຸກພາກສ່ວນຖືເອົາການປັບປຸງເອກະສານກອງປະຊຸມສະພາແຫ່ງຊາດ ເປັນວຽກງານບຸລິມະສິດກວ່າວຽກງານອື່ນ, ພາຍຫຼັງສຳເລັດການປັບປຸງເອກະສານດັ່ງກ່າວ ແລ້ວຈຶ່ງສ້າງແຜນການເຄື່ອນໄຫວວຽກງານອື່ນ ໂດຍສະເພາະການເຄື່ອນໄຫວວຽກງານການຕ່າງປະເທດ, ການເຄື່ອນໄຫວວຽກງານຢູ່ຕ່າງແຂວງ.

4. ການຄົ້ນຄວ້າ ແລະ ປັບປຸງກົດໝາຍຂົງເຂດສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ກໍເປັນວຽກງານທີ່ບັນດາກົງຈັກເສນາທິການຈະຕ້ອງໄດ້ພ້ອມກັນສຸມໃສ່ລົງເລິກການຄົ້ນຄວ້າ, ເກັບກຳຂໍ້ມູນ ປະຕິບັດວຽກງານໃນໄລຍະຜ່ານມາ ມີບັນຫາຫຍຸ້ງຍາກແນວໃດເພື່ອຈະໄດ້ຄົ້ນຄວ້າກຳນົດວິທີການແກ້ໄຂເຂົ້າໃນການປັບປຸງກົດໝາຍຄັ້ງນີ້ ໃຫ້ມີບາດກ້າວບຸກທະລຸ ແລະ ການປະຕິບັດໜ້າທີ່ວຽກງານໂລ່ງລ່ຽນຂຶ້ນ.

5. ກະກຽມການດຳເນີນກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານພັກສະພາແຫ່ງຊາດ ເປັນການຜັນຂະຫຍາຍ ຄຳສັ່ງຂອງຄະນະເລຂາທິການສູນກາງພັກ, ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ເຂົ້າໃນການເຄື່ອນໄຫວຂອງຄະນະພັກສະພາແຫ່ງຊາດ ຈະໄດ້ພ້ອມກັນຈັດຕັ້ງປະຕິບັດຢ່າງເລິກເຊິ່ງ ເປັນຕົ້ນການສະຫຼຸບຕີລາຄາການເຄື່ອນໄຫວນຳພາຊີ້ນຳການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ IV ຂອງອົງຄະນະພັກສະພາແຫ່ງຊາດ, ການທາບທາມຄວາມໄວ້ວາງໃຈຂອງສະມາຊິກພັກ ຕໍ່ບຸກຄົນໃນຄະນະບໍລິຫານງານພັກກາງສະໄໝ, ສຳຫຼວດການນຳພາລວມຂອງຄະນະບໍລິຫານງານພັກ, ສຳຫຼວດບຸກຄົນໃນຄະນະບໍລິຫານງານພັກ ແລະ ວຽກງານອື່ນໆຈຳນວນໜຶ່ງ.

6. ວຽກງານສຳຄັນອັນໜຶ່ງຂອງສະພາແຫ່ງຊາດ ແມ່ນການຄົ້ນຄວ້າຜັນຂະຫຍາຍນິຕິກຳ ກ່ຽວກັບການຮ່ວມມື ລາວ-ຈີນ ເຂົ້າໃນການສ້າງ ແລະ ປັບປຸງກົດໝາຍ ເພື່ອກຳນົດມາດຕະການຊຸກຍູ້ ເຮັດໃຫ້ວຽກງານຕ່າງໆ ໄດ້ຮັບການຈັດຕັ້ງປະຕິບັດ; ຕິດຕາມ, ເກັບກຳຂໍ້ມູນວຽກງານໃດ, ໂຄງການໃດ ຈະຕ້ອງໄດ້ຜ່ານການພິຈາລະນາຮັບຮອງຈາກ ສະພາແຫ່ງຊາດ ຕາມກົດໝາຍ ກໍຕ້ອງໄດ້ຊຸກຍູ້ພາກສ່ວນກ່ຽວຂ້ອງ ໃຫ້ດຳເນີນສອດຄ່ອງກັບກົດໝາຍ ແລະ ອື່ນໆ.

7. ສະພາແຫ່ງຊາດລາວ ກະກຽມເປັນເຈົ້າພາບຈັດກອງປະຊຸມສຸດຍອດລັດຖະສະພາ 3 ປະເທດ ກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ເຊິ່ງຄາດວ່າຈະຈັດໃນທ້າຍປີນີ້ ແລະ ການກະກຽມຮັບເປັນເຈົ້າພາບກອງປະຊຸມສະມັດຊາໃຫຍ່ ລັດຖະສະພາລະຫວ່າງຊາດອາຊຽນ (ໄອປາ-45) ຄັ້ງທີ 45 ໃນປີ 2024; ສະນັ້ນ, ຄະນະພັກ ຄະນະປະຈຳສະພາແຫ່ງຊາດ ຈະຕ້ອງໄດ້ຊີ້ນຳພາກສ່ວນຊ່ວຍວຽກຂອງຕົນ ເປັນເຈົ້າການກະກຽມແຕ່ຫົວທີ ໂດຍສົມທົບພາກສ່ວນກ່ຽວຂ້ອງກະກຽມ.

(ນາງ ໄຊໂສພາພອນ ມິ່ງມຸງຄຸນ)



## ປະທານ...

(ຕໍ່ຈາກໜ້າ 1)

ຖືກຕ້ອງ, ສະຫຼາດສ່ອງໃສ ແລະ ມີໄຫວພິບຂອງພັກກອມມູນິດຫວຽດນາມ ໂດຍມີສະຫາຍເລຂາທິການໃຫຍ່ຫງວຽນ ຟູ ຈ້ອງ ເປັນຜູ້ນຳໜ້າ ໃນຕະຫຼອດໄລຍະຜ່ານມາ ໂດຍສະເພາະໝາກຜົນໃນການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ ກໍຄືການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XIII ຂອງພັກກອມມູນິດຫວຽດນາມ, ອັນເຮັດໃຫ້ ສສ.ຫວຽດນາມ ມີສະຖຽນລະພາບທາງດ້ານການເມືອງຢ່າງໝັກແໜ້ນ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບມີຄວາມເຂັ້ມແຂງ, ມີຜົນສຳເລັດໃນການປ້ອງກັນ-ຕ້ານພະຍາດ ແລະ ຟື້ນຟູການພັດທະນາເສດຖະກິດ-ສັງຄົມ, ສ້າງພື້ນຖານເສດຖະກິດ ເອກະລາດ, ເປັນເຈົ້າຕົນເອງ, ໂດຍຕິດພັນກັບຄວາມເປັນເຈົ້າການ, ຕັ້ງໜ້າເຊື່ອມໂຍງຢ່າງກວ້າງຂວາງ ແລະ ມີປະສິດທິຜົນ ອັນໄດ້ເຮັດໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ເພີ່ມຂຶ້ນ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການຍົກສູງຂຶ້ນເປັນກ້າວໆ; ພ້ອມນັ້ນ, ທ່ານປະທານສະພາແຫ່ງຊາດລາວ ຍັງໄດ້ຕີລາຄາສູງ ແລະ ຊົມເຊີຍຕໍ່ຜົນການພົບປະເຮັດວຽກ ລະຫວ່າງ ສະຫາຍ ກັບ ສະຫາຍ ທອງສະຫວັນ ພົມວິຫານ ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໃນເຊົ້າມື້ນີ້; ຕີລາຄາສູງຕໍ່ການປະກອບສ່ວນຂອງຄະນະພົວພັນຕ່າງປະເທດຂອງສອງສູນກາງພັກ ລາວ-ຫວຽດນາມ ໃນໄລຍະຜ່ານມາ ໃນການປະຕິບັດໜ້າທີ່ເປັນເສນາທິການໃຫ້ແກ່ສູນກາງພັກໃນການປະສານງານ, ຕິດຕາມ, ຊຸກຍູ້ ການຈັດຕັ້ງຜັນຂະຫຍາຍບົດບັນທຶກຂໍ້ຕົກລົງສອງກົມການເມືອງ, ອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ການຢ້ຽມຢາມເຊິ່ງກັນແລະກັນ ຂອງບັນດາການນຳຂັ້ນສູງຂອງສອງຝ່າຍ ໃນໄລຍະຜ່ານມາ, ມີການປະກອບສ່ວນເຂົ້າໃນຜົນສຳເລັດ ຂອງການພົບປະ ລະຫວ່າງ ສອງກົມການເມືອງລາວ-ຫວຽດນາມ, ຈັດຕັ້ງກິດຈະກຳສະເຫຼີມສະຫຼອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ, ປະສານສົມທົບໃນການຈັດຊຸດບຳລຸງສຳລັບການນຳຂັ້ນສູງ, ຈັດກອງປະຊຸມສຳມະນາທິດສະດີ ແລະ ອື່ນໆ ໃນໄລຍະຜ່ານມາ. ຫວັງວ່າ 2 ຄະນະພົວພັນຕ່າງປະເທດສູນກາງພັກ ຈະສືບຕໍ່ພົວພັນຮ່ວມມື ແລະ ສະໜັບສະໜູນ ເຊິ່ງກັນແລະກັນຢ່າງສະໜິດແໜ້ນ, ໃກ້ຊິດກັນໃນເວທີພາກພື້ນ ແລະ ສາກົນ.

ຈາກນັ້ນ, ສະຫາຍຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ໄດ້ກ່າວສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ພ້ອມທັງແຈ້ງໃຫ້ຊາບກ່ຽວກັບຜົນສຳເລັດໃນການເຄື່ອນໄຫວເຮັດວຽກຢູ່ ສປປ ລາວ ໃນຄັ້ງນີ້ ແລະ ຈະສືບຕໍ່ເພີ່ມທະວີການພົວພັນຮ່ວມມືສອງຝ່າຍ ປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງ ລາວ-ຫວຽດນາມ ໃຫ້ເຂົ້າສູ່ລວງເລິກ ແລະ ນັບມື້ເກີດດອກອອກຜົນຢ່າງບໍ່ຢຸດຢັ້ງ.

## ຮອງປະທານ...

(ຕໍ່ຈາກໜ້າ 1)

(ສພຊ) ໃນລະຫວ່າງວັນທີ 14-15 ກຸມພາຜ່ານມາ, ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກທີ 12 ແຂວງຄຳມ່ວນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິວຽກງານການຂຸດຄົ້ນແຮ່ທາດ ຢູ່ແຂວງຄຳມ່ວນ ເຂົ້າຮ່ວມມີທ່ານເຈົ້າເມືອງ ແລະ ບັນດາທ່ານຫົວໜ້າ-ຮອງຫົວໜ້າພະແນກການ.

ການເຄື່ອນໄຫວເຮັດວຽກຄັ້ງນີ້, ທ່ານຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ຮັບຟັງການລາຍງານກ່ຽວກັບສະພາບການລົງທຶນ, ເຂດຂຸດຄົ້ນ, ລາຍຮັບການສົ່ງອອກ ແລະ ການເສຍພັນທະ, ລວມໄປເຖິງການສ້າງວຽກເຮັດງານທຳໃຫ້ປະຊາຊົນ ແລະ ການມີສ່ວນຮ່ວມໃນການສ້າງສາພັດທະນາແຂວງຄຳມ່ວນ ກໍຄືປະເທດຊາດ ຈາກພະແນກການຂອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງລາຍງານ. ຈາກນັ້ນ, ຄະນະໄດ້ເດີນທາງຢ້ຽມຢາມບໍລິສັດ ຊີໂນ-ອາກຣີໂປຕາສ ຈຳກັດ ທີ່ບ້ານດົງໃຕ້ເມືອງທ່າແຂກ ໂດຍການຕ້ອນຂອງທ່ານ ໂຖງຢົງເຫີງ ຜູ້ອຳນວຍການບໍລິສັດ ຊີໂນ-ອາກຣີໂປຕາສ ຈຳກັດ ພ້ອມຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບການລິເລີ່ມຈັດຕັ້ງປະຕິບັດພັດທະນາໂຄງການບໍລິສັດຊີໂນ-ອາກຣີ ໂປຕາສ ຈຳກັດ ແມ່ນໄດ້ເຊັນສັນຍາຂຸດຄົ້ນ ແລະ ປຸງແຕ່ງເກືອໂປຕາສ ໃນເດືອນມັງກອນ 2009 ແລະ ໄດ້ເລີ່ມທົດລອງຜະລິດໃນປີ 2011 ໃນປະລິມານ 1 ແສນໂຕນຕໍ່ປີ ແລະ ໃນປີ 2021 ແມ່ນໄດ້ສຳເລັດການກໍ່ສ້າງໂຄງການຜະລິດເກືອໂປຕາສ 1 ລ້ານໂຕນຕໍ່ປີ, ມາຮອດ ໃນປີ 2022 ໄດ້ສຳເລັດການກໍ່ສ້າງໂຄງການຝຸ່ນໂປຕາສຂະໜາດ 1 ລ້ານໂຕນຕໍ່ປີ, ແຫ່ງທີ 2 ແລະ ໄດ້ເປີດທົດລອງຜະລິດໃນວັນທີ 1 ມັງກອນ 2023 ເຊິ່ງກາຍເປັນໂຄງການເກືອໂປຕາສລະດັບ 2 ລ້ານໂຕນແຫ່ງທຳອິດ ໃນອະນາຄົດໂຄງການຈະຂະຫຍາຍກຳລັງການຜະລິດຈະໃຫ້ໄດ້ 5 ລ້ານໂຕນຕໍ່ປີ ແລະ ເປັນໂຄງການເກືອໂປຕາສທີ່ໃຫຍ່ທີ່ສຸດໃນອາຊຽນ. ພ້ອມນັ້ນ, ບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ຍັງໄດ້ມີຄຳເຫັນແລກປ່ຽນມາຍັງບໍລິສັດໃນການປະຕິບັດວຽກງານ, ບັນຫາຂໍ້ສະດວກ ແລະ ຂໍ້ຄົງຄ້າງໃນການດຳເນີນທຸລະກິດໃນຜ່ານມາ.

ໂອກາດດັ່ງກ່າວ, ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ໄດ້ມີຄຳເຫັນວ່າ: ການເຄື່ອນໄຫວຕິດຕາມກວດກາໃນຄັ້ງນີ້ ແມ່ນໄດ້ປະຕິບັດຕາມມະຕິທີ່ສະພາແຫ່ງຊາດໄດ້ກຳນົດ ເຊິ່ງການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາທຳມະຊາດ ໂດຍສະເພາະແມ່ນການຄຸ້ມຄອງສຳຫຼວດ ແລະ ຂຸດຄົ້ນແຮ່ທາດ ແມ່ນຖືວ່າເປັນວຽກງານໜຶ່ງທີ່ສຳຄັນຕໍ່ການຂະຫຍາຍຕົວຂອງເສດຖະກິດ ແລະ ສ້າງລາຍຮັບແຫ່ງຊາດ, ຄຽງຄູ່ກັນກັບການສ້າງພື້ນຖານໂຄງລ່າງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ; ພ້ອມນັ້ນ, ທ່ານຮອງປະທານສະພາແຫ່ງຊາດໄດ້ເນັ້ນໃຫ້ບໍລິສັດ ເອົາໃຈໃສ່ວຽກງານການປົກປັກຮັກສາສິ່ງແວດລ້ອມທຳມະຊາດສີຂຽວຍືນຍົງ, ທັນສະໄໝ ແລະ ສະເໜີໃຫ້ໂຄງການເອົາໃຈໃສ່ສ້າງວຽກເຮັດງານທຳໃຫ້ປະຊາຊົນໃນຊຸມຊົນ, ສ້າງຖະໜົນຫົນທາງ, ໂຮງຮຽນ, ສຸກສາລາ ເພື່ອໃຫ້ປະຊາຊົນໄປມາສະດວກສະບາຍ.

(ເອື້ອ ມະໂນສິງ)




## ກຳມາທິການ...

(ຕໍ່ຈາກໜ້າ 1)

ປັບປຸງກົດໝາຍ 5 ປີ (2026-2030) ຂອງສະພາແຫ່ງຊາດ ຊຸດທີ X ແລະ ການກະກຽມສະຫຼຸບຕີລາຄາວຽກງານໂຄສະນາເຜີຍແຜ່ກົດໝາຍ ແລະ ສ້າງສະຕິເຄົາລົບກົດໝາຍໃນທົ່ວສັງຄົມ. ສະນັ້ນ, ໃນວັນທີ 20 ກຸມພາ 2023 ກຳມາທິການກົດໝາຍ ໄດ້ສົມທົບກັບບັນດາກຳມາທິການສະພາແຫ່ງຊາດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈັດກອງປະຊຸມປຶກສາຫາລືວຽກງານກົດໝາຍ ທີ່ສະພາແຫ່ງຊາດ ພາຍໃຕ້ການເປັນປະທານຂອງທ່ານ ສຈ. ປອ ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ ທັງເປັນປະທານກຳມາທິການກົດໝາຍ; ເຂົ້າຮ່ວມມີປະທານ, ຮອງປະທານກຳມາທິການພາຍໃນສະພາແຫ່ງຊາດ, ລັດຖະມົນຕີ, ຮອງລັດຖະມົນຕີ, ຫົວໜ້າ ແລະ ຮອງຫົວໜ້າອົງການທີ່ກ່ຽວຂ້ອງ.

ກອງປະຊຸມໄດ້ຮັບຟັງຜູ້ຕາງໜ້າກຳມາທິການກົດໝາຍ ລາຍງານກ່ຽວກັບ 4 ເນື້ອໃນສຳຄັນ ຄື: ບົດສະຫຼຸບວຽກງານສ້າງ ແລະ ປັບປຸງກົດໝາຍ, ແຜນການສ້າງ ແລະ ປັບປຸງກົດໝາຍ ປີ 2023-2025 ຂອງສະພາແຫ່ງຊາດ ຊຸດທີ IX, ແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2026-2030) ຂອງສະພາແຫ່ງຊາດ ຊຸດທີ X ແລະ ແຜນການປະເມີນການໂຄສະນາເຜີຍແຜ່ກົດໝາຍ ແລະ ສ້າງສະຕິເຄົາລົບກົດໝາຍໃນທົ່ວສັງຄົມ. ພ້ອມກັນນີ້, ກອງປະຊຸມໄດ້ຮັບຟັງການປະກອບຄຳເຫັນທີ່ເປັນປະໂຫຍດ ໃຫ້ແກ່ກອງປະຊຸມ.

ໃນຕອນທ້າຍ, ທ່ານ ສຈ. ປອ ຈະເລີນ ເຢຍປາວເຮີ ໄດ້ກ່າວສະແດງຄວາມຊົມເຊີຍ ແລະ ຂອບໃຈຢ່າງເລິກເຊິ່ງ ຕໍ່ບັນດາທ່ານທີ່ໄດ້ເຂົ້າຮ່ວມແຕ່ຕົ້ນຕະຫຼອດປາຍ ໂດຍສະເພາະຕໍ່ຄຳເຫັນຂອງບັນດາທ່ານ ເຊິ່ງໄດ້ເປັນເອກະພາບໂດຍພື້ນຖານຕໍ່ບັນດາເນື້ອໃນ ແລະ ສະເໜີໃຫ້ບັນດາທ່ານຈົ່ງນຳເອົາຈິດໃຈ, ເນື້ອໃນຂອງກອງປະຊຸມຄັ້ງນີ້ ລາຍງານໃຫ້ຄະນະນຳຂອງຕົນຮັບຊາບແລ້ວຂໍທິດຊີ້ນຳ ເພື່ອຈັດຕັ້ງຜັນຂະຫຍາຍໃນຂອບເຂດຄວາມຮັບຜິດຊອບຂອງແຕ່ລະກະຊວງ, ອົງການ ໃຫ້ທັນກຳນົດເວລາ; ໃຫ້ທຸກພາກສ່ວນຮີບຮ້ອນຫັນເປັນແຜນການລະອຽດ ແລະ ແຕ່ງຕັ້ງຜູ້ຮັບຜິດຊອບ, ມອບໝາຍ ໜ້າທີ່ໃຫ້ລະອຽດຈະແຈ້ງ, ຂຶ້ນແຜນງົບປະມານ, ກຳນົດໜ້າວຽກ ແລະ ເວລາໃຫ້ສຳເລັດ ເພື່ອຮັບປະກັນປະສິດທິພາບ, ປະສິດທິຜົນໃນການຈັດຕັ້ງປະຕິບັດ; ນອກຈາກນັ້ນ, ທ່ານຍັງໄດ້ເນັ້ນຕື່ມອີກວ່າ: ໃຫ້ແຕ່ລະກະຊວງ, ອົງການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2026-2030 ໃຫ້ຖືເອົາຄຸນນະພາບເປັນສຳຄັນ, ປະລິມານເປັນສຳຮອງ, ຄັດເລືອກເອົາກົດໝາຍທີ່ມີຄວາມຈຳເປັນ ແລະ ຮີບດ່ວນ ຖ້າຫາກເຫັນວ່າກົດໝາຍໃດ ທີ່ບໍ່ທັນມີຄວາມຈຳເປັນແມ່ນໃຫ້ສ້າງເປັນດຳລັດ, ຖ້າວ່າກົດໝາຍໃດບໍ່ຜ່ານຕາມຂັ້ນຕອນ ແລະ ບໍ່ທັນຕາມກຳນົດເວລາ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສ້າງນິຕິກຳ ກໍຈະຕົກໄປ ຫຼື ບໍ່ໄດ້ຮັບການພິຈາລະນາອີກ.

ສຳລັບທິດທາງແຜນການປະເມີນການໂຄສະນາເຜີຍແຜ່ກົດໝາຍ ແລະ ການສ້າງສະຕິເຄົາລົບກົດໝາຍນັ້ນ ຈະໄດ້ມີຄຳແນະນຳແຈ້ງການເປັນລາຍລັກອັກສອນຕ່າງຫາກ. ສະເໜີໃຫ້ກະຊວງ, ອົງການທີ່ເປັນເຈົ້າຂອງກົດໝາຍ ເປັນເຈົ້າການດຳເນີນການປະເມີນການໂຄສະນາ ເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ຢູ່ໃນຄວາມຮັບຜິດຊອບ ໄດ້ກວດກາຄືນກົດໝາຍແມ່ນມີການໂຄສະນາ ເຜີຍແຜ່ທົ່ວເຖິງແລ້ວຫຼືບໍ່ ? ພະນັກງານ-ລັດຖະກອນ ໃນຄວາມຮັບຜິດຊອບ ແຕ່ຂັ້ນສູນກາງຮອດຂັ້ນເມືອງ, ອົງການອື່ນ, ປະຊາຊົນ, ນັກທຸລະກິດ ໄດ້ຮັບການເຜີຍແຜ່ແລ້ວບໍ່? ການໂຄສະນາ ເຜີຍແຜ່ ແມ່ນໄດ້ຈັກຄັ້ງ? ແລະ ມີຜູ້ເຂົ້າຮ່ວມຈັກຄົນ? ແລ້ວສະຫຼຸບຕີລາຄາການປະເມີນຫາລັດຖະບານ ເພື່ອສະຫຼຸບສັງລວມຜົນການປະເມີນຕາມ 5 ຂົງເຂດ ຄື: 1. ກົດໝາຍຂົງເຂດເສດຖະ ກິດ, 2. ກົດໝາຍຂົງເຂດວັດທະນະທຳສັງຄົມ, 3. ກົດໝາຍຂົງເຂດການປົກຄອງ ແລະ ຍຸຕິທຳ, 4. ກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, 5. ກົດໝາຍຂົງເຂດຕ່າງປະເທດລາຍງານຫາສະພາແຫ່ງຊາດ.

# ສະພາປະຊາຊົນແຂວງຜົ້ງສາລີ ຈັດກອງປະຊຸມ ປະຈຳປີ 2022 ຂອງ 3 ຄະນະກຳມະການ ແລະ ຄະນະເລຂາທິການ



(ສພຊ) ໃນວັນທີ 7 ກຸມພາ 2023 ທີ່ຫ້ອງປະຊຸມໃຫຍ່ຂອງສະພາປະຊາຊົນແຂວງຜົ້ງສາລີ ໄດ້ຈັດກອງປະຊຸມຄົບຄະນະ ປະຈຳປີ 2022 ຂອງ 3 ຄະນະກຳມະການ ແລະ ກອງປະຊຸມປະຈຳປີ 2022 ຂອງຄະນະເລຂາທິການສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ສົມຈິດ ທັບລະກອນ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ເລຂາ-ຮອງເລຂາທິການສະພາປະຊາຊົນແຂວງ ພ້ອມດ້ວຍບັນດາທ່ານສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງ ທີ່ເປັນກຳມະການສັງກັດຂອງບັນດາຄະນະກຳມະການ ແລະ ພະນັກງານ-ລັດຖະກອນ ພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມໄດ້ຮັບຟັງທ່ານ ຄຳດາ ໂສລະພົມ ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ຂຶ້ນຜ່ານຮ່າງບົດສະຫຼຸບຕີລາຄາການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ຂອງຄະນະກຳມະການ; ຮັບຟັງທ່ານ ນາງ ຈັນມະນີ ດວງພາສຸກ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ຜ່ານຮ່າງບົດສະຫຼຸບຕີລາຄາການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງຄະນະກຳມະການ; ຮັບຟັງທ່ານ ສົມຈິດ ລາວຈຸງ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ຜ່ານຮ່າງບົດສະຫຼຸບຕີລາຄາການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ຂອງຄະນະກຳມະການ ແລະ ຮັບຟັງທ່ານ ນາງ ພອນສະຫວັນ ສັກຕິຄຸນ ເລຂາທິການສະພາປະຊາຊົນແຂວງ ຜ່ານຮ່າງບົດສະຫຼຸບຕີລາຄາການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງຄະນະເລຂາທິການສະພາປະຊາຊົນແຂວງ; ຫຼັງຈາກນັ້ນ, ປະທານກອງປະຊຸມກໍໄດ້ມີຄຳເຫັນເຈາະຈີ້ມ ຕໍ່ກັບບັນດາເນື້ອໃນບົດສະຫຼຸບຂອງແຕ່ລະຄະນະກຳມະການ ແລະ ຄະນະເລຂາທິການສະພາປະຊາຊົນແຂວງ ເພື່ອເປັນທິດໃຫ້ແກ່ ບັນດາຜູ້ແທນກອງປະຊຸມ (ສະມາຊິກສະພາປະຊາຊົນແຂວງ) ໄດ້ປະກອບຄຳຄິດຄຳເຫັນຕໍ່ກັບເນື້ອໃນ ຢ່າງມີຄວາມຮັບຜິດຊອບສູງ ແລະ ເປັນຂະບວນຟົດຟື້ນ ເພື່ອເຮັດໃຫ້ເນື້ອໃນກອງປະຊຸມຄັ້ງນີ້ ຄົບຖ້ວນ, ສົມບູນ ແລະ ຖືກຕ້ອງສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ຕາມກົດໝາຍກຳນົດໄວ້, ຮັບປະກັນເຮັດໃຫ້ການຈັດຕັ້ງປະຕິບັດໜ້າທີ່ວຽກງານໄດ້ມີຜົນສຳເລັດ ແລະ ການຈັດຕັ້ງໄດ້ຮັບການປັບປຸງໃຫ້ເຂັ້ມແຂງໄປເທື່ອລະກ້າວ.

ໃນຕອນທ້າຍ, ປະທານກອງປະຊຸມ ຍັງໃຫ້ກຽດໂອ້ລົມ ໂດຍທ່ານໄດ້ຍ້ອງຍໍຊົມເຊີຍຕໍ່ກອງປະຊຸມຂອງພວກເຮົາໃນຄັ້ງນີ້ ທີ່ໄດ້ພ້ອມກັນສະຫຼຸບຕີລາຄາຜົນການຈັດຕັ້ງປະຕິບັດວຽກງານໃນໄລຍະ 1 ປີຜ່ານມາ ແລະ ທິດທາງແຜນການປະຈຳປີ 2023 ຂອງ 3 ຄະນະກຳມະການ ແລະ ຄະນະເລຂາທິການສະພາປະຊາຊົນແຂວງ, ເຊິ່ງໄດ້ຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້ ແລະ ກຳນົດທິດທາງແຜນການ ປະຈຳປີ 2023 ເພື່ອເປັນບ່ອນອີງໃນການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ວຽກງານ, ສະແດງຄວາມຊົມເຊີຍຕໍ່ບັນດາທ່ານທີ່ໄດ້ປະກອບຄຳຄິດເຫັນ ຕໍ່ບົດສະຫຼຸບຂອງ 3 ຄະນະກຳມະການ ແລະ ຄະນະເລຂາທິການສະພາປະຊາຊົນແຂວງ ດ້ວຍຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງທີ່ໄດ້ຮັບການມອບໝາຍ ໂດຍສະເພາະການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ໃນການເປັນເສນາທິການໃຫ້ຄະນະປະຈຳສະພາປະຊາຊົນແຂວງ ກໍຄືສະພາປະຊາຊົນແຂວງ; ນອກຈາກນັ້ນ, ທ່ານໄດ້ເນັ້ນ ແລະ ຮຽກຮ້ອງມາຍັງບັນດາຄະນະກຳມະການ ແລະ ຄະນະເລຂາທິການສະພາປະຊາຊົນແຂວງ ກໍຄືຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ ທີ່ເປັນກຳມະການສັງກັດ ຕ້ອງສຸມໃສ່ຈັດຕັ້ງປະຕິບັດແຜນການວຽກງານຫຼາຍດ້ານໃນປີ 2023 ໃຫ້ປາກົດຜົນເປັນຈິງ ໂດຍສະເພາະແມ່ນຈະໄດ້ສຸມໃສ່ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023 ຂອງແຂວງ, ແຜນປະຈຳປີ 2023 ຂອງສະພາແຫ່ງຊາດ ກໍຄືຂອງສະພາປະຊາຊົນແຂວງ ຊຸດທີ II. ຕ້ອງມີການປະສານສົມທົບຢ່າງກົມກຽວກັນ ໃນການສັງລວມ, ເກັບກຳຂໍ້ມູນ ແລະ ການສະຫຼຸບສ່ອງແສງລາຍງານເປັນປະຈຳ, ທັງເປັນການເຊີດຊູບົດບາດຂອງຕົນເອງ ໂດຍສະເພາະການພົວພັນກັບພາກສ່ວນກ່ຽວຂ້ອງຂອງອົງການປົກຄອງແຂວງ ກໍຄືການປະສານງານພາຍໃນຄະນະກຳມະການ, ຄະນະເລຂາທິການສະພາປະຊາຊົນແຂວງ ເພື່ອພ້ອມກັນສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍຕ່າງໆ ໃຫ້ປະສົບຜົນສຳເລັດ ຕາມຄາດໝາຍທີ່ກຳນົດໄວ້.

(ນັກຂ່າວ ສພຂ ຜົ້ງສາລີ)



# ສະພາປະຊາຊົນແຂວງຫຼວງນໍ້າທາ ຕີລາຄາຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ



(ສພຊ) ຕອນແລງວັນທີ 9 ກຸມພາ 2023 ສະພາປະຊາຊົນແຂວງຫຼວງນໍ້າທາ ໄດ້ເປີດກອງປະຊຸມຕີລາຄາຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາປີ 2016-2020 ແລະ ທິດທາງແຜນການຮອດປີ 2025 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ພາຍໃຕ້ການເປັນປະທານຂອງທ່ານ ກົງເພັດ ແກ້ວບົວພາ ຮອງປະທານສະພາປະຊາຊົນແຂວງ ທັງເປັນຫົວໜ້າຄະນະຊີ້ນຳການແຂ່ງຂັນຍ້ອງຍໍຮັກຊາດ ແລະ ພັດທະນາ ສະພາປະຊາຊົນແຂວງ; ມີສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການເຂົ້າຮ່ວມທັງໝົດ 40 ກວ່າຄົນ.

ໃນພິທີ ໄດ້ຮັບຟັງຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳການແຂ່ງຂັນຍ້ອງຍໍຮັກຊາດ ເລກທີ 01/ຄຊຂຍຂ, ລົງວັນທີ 12 ມັງກອນ 2023 ແລະ ພັດທະນາ; ຮັບຟັງຮ່າງບົດສະຫຼຸບຕີລາຄາຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ 2016-2020 ແລະ ທິດທາງແຜນການ ຮອດປີ 2025 ເຊິ່ງໄລຍະ 5 ປີຜ່ານມາ ສາມາດສະຫຼຸບສັງລວມຍ້ອງຍໍພາຍໃນ ສະພາປະຊາຊົນແຂວງຫຼວງນໍ້າທາ ລວມທັງໝົດໄດ້ 20 ຫຼຽນ ແລະ 14 ໃບ, ໃນນີ້ມີບຸກຄົນ 34 ທ່ານ; ກົມກອງ 1 ຫຼຽນ ຄື: ຫຼຽນໄຊແຮງງານຊັ້ນ1 ຈຳນວນ 1 ຫຼຽນ, ຫຼຽນໄຊແຮງງານຊັ້ນ 2 ຈຳນວນ 2 ຫຼຽນ, ຫຼຽນໄຊແຮງງານຊັ້ນ 3 ຈຳນວນ 6 ຫຼຽນ, ໃບຍ້ອງຍໍລັດຖະບານຈຳນວນ 13 ໃບ, ໃບຍ້ອງຍໍເຈົ້າແຂວງ ຈຳນວນ 1 ໃບ ແລະ ກົມກອງແມ່ນຫຼຽນໄຊແຮງງານຊັ້ນ2 ຈຳນວນ1 ຫຼຽນ ແລະ ທິດທາງແຜນການຈະສືບຕໍ່ຈັດຕັ້ງປະຕິບັດແຂ່ງຂັນຮັກຊາດ ແລະ ພັດທະນາຕາມ 5 ສູ້ຊົນ 4 ເພີ່ມທະວີໃຫ້ໄດ້ຕາມຄາດໝາຍທີ່ວາງໄວ້; ພ້ອມດຽວກັນນີ້, ຍັງໄດ້ແລກປ່ຽນປະກອບຄຳຄິດເຫັນໃສ່ຮ່າງບົດສະຫຼຸບຕີລາຄາຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ 2016-2020 ແລະ ທິດທາງແຜນການຕາມ 5 ສູ້ຊົນ 4 ເພີ່ມທະວີຮອດປີ 2025 ຢ່າງກົງໄປກົງມາ ເພື່ອເຮັດໃຫ້ຮ່າງບົດສະຫຼຸບດັ່ງກ່າວໃຫ້ມີເນື້ອໃນຄົບຖ້ວນຖືກຕ້ອງ, ສອດຄ່ອງຂຶ້ນກວ່າເກົ່າ.

# ສະຫຼຸບຜົນສຳເລັດການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4




(ສພຊ) ສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ຈັດກອງປະຊຸມສະຫຼຸບຜົນສຳເລັດການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ໃນຕອນເຊົ້າວັນທີ 10 ກຸມພາ 2023 ພາຍໃຕ້ການເປັນປະທານຂອງທ່ານ ກົງແກ້ວ ມົວລະຈັກ ປະທານສະພາປະຊາຊົນແຂວງສະຫວັນນະເຂດ, ມີບັນດາທ່ານຮອງປະທານສະພາປະຊາຊົນແຂວງ, ບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ບັນດາທ່ານຮອງປະທານຄະນະກຳມະການ, ຄະນະເລຂາທິການ, ບັນດາຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍວິຊາການພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນກອງປະຊຸມໄດ້ຮັບຟັງການຜ່ານສະຫຼຸບຜົນສຳເລັດການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ4ຂອງສະພາປະຊາຊົນແຂວງ ຊຸດທີ II ຈາກທ່ານຮອງເລຂາທິການສະພາປະຊາຊົນແຂວງ; ຈາກນັ້ນ, ປະທານກອງປະຊຸມກໍໄດ້ມີຄຳເຫັນເຈາະຈີ້ມ ແລະ ບັນດາທ່ານຄະນະກຳມະການ ກໍຄືບັນດາອະນຸກຳມະການຕ່າງໆ ກໍໄດ້ມີແລກປ່ຽນຄຳຄິດຄຳເຫັນໃນການກະກຽມກອງປະຊຸມທີ່ຜ່ານມາ ພ້ອມທັງຕີລາຄາສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ ແນໃສ່ເຮັດໃຫ້ການກະກຽມດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ໃຫ້ດີຂຶ້ນກວ່າເກົ່າ.

ໂອກາດດັ່ງກ່າວ, ທ່ານກົງແກ້ວ ມົວລະຈັກ ໄດ້ສະແດງຄວາມຊົມເຊີຍຕໍ່ບັນດາທ່ານທີ່ຮັບຜິດຊອບເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 4 ຢ່າງມີຄວາມຮັບຜິດຊອບສູງ ເຮັດໃຫ້ກອງປະຊຸມດັ່ງກ່າວສຳເລັດຕາມຄາດໝາຍທີ່ວາງໄວ້. ພ້ອມນັ້ນ, ຮຽກຮ້ອງຕໍ່ບັນດາທ່ານໃຫ້ເອົາໃຈໃສ່ແກ້ໄຂຂໍ້ຄົງຄ້າງ ກໍຄືການປະຕິບັດວຽກງານຂອງສະພາປະຊາຊົນແຂວງ ຕາມທີ່ກົດໝາຍກຳນົດໄວ້ ໃຫ້ໄດ້ຮັບຜົນດີ ແລະ ມີຜົນສຳເລັດຫຼາຍຂຶ້ນ ຢ່າງຕໍ່ເນື່ອງ.

## ກອງປະຊຸມປະຈຳປີ 2022 ຂອງຄະນະເລຂາທິການສະພາປະຊາຊົນແຂວງຊຽງຂວາງ



(ສພຊ) ໃນວັນທີ 2 ກຸມພາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ເປີດກອງປະຊຸມ ປະຈຳ 2022 ຂອງຄະນະເລຂາທິການສະພາປະຊາຊົນແຂວງຊຽງຂວາງ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ວຽງໄຊ ສີວິໄລ ຮອງປະທານສະພາປະຊາຊົນແຂວງ ຜູ້ຊີ້ນຳວຽກງານຄະນະເລຂາທິການສະພາປະຊາຊົນແຂວງ ແລະ ທ່ານ ນາງ ສາຍພູເງິນ ອຸດົມສຸກ ເລຂາທິການສະພາປະຊາຊົນແຂວງ, ເຂົ້າຮ່ວມມີບັນທ່ານຄະນະປະຈຳສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າຫ້ອງວ່າການແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ, ພະນັກງານຄົນຄວ້າສັງລວມຂອງຫ້ອງວ່າການແຂວງ ແລະ ພະນັກງານຂອງສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມໃນຄັ້ງນີ້ແມ່ນເພື່ອເປັນການສະຫຼຸບຕີລາຄາ, ກວດກາຄືນກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະເລຂາທິການສະພາປະຊາຊົນແຂວງຊຽງຂວາງ ໃນຖານະເປັນເສນາທິການໃຫ້ຄະນະປະຈຳສະພາປະຊາຊົນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ ໃນການຄົ້ນຄວ້າ-ສັງລວມເນື້ອໃນວຽກງານຮອບດ້ານ, ຄຸ້ມຄອງວຽກງານບໍລິຫານ, ແຜນການແລະການເງິນ, ຄຸ້ມຄອງວຽກງານຈັດຕັ້ງ-ພະນັກງານ ແລະ ການບໍລິການຮັບໃຊ້ໄລຍະຜ່ານມາ.

ໃນທີ່ປະຊຸມ, ທ່ານ ຄຳຫຼ້າ ແສງຄຳຢອງ ຮອງເລຂາທິການສະພາປະຊາຊົນແຂວງ ໄດ້ຜ່ານຮ່າງບົດສະຫຼຸບປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຂອງຄະນະເລຂາທິການສະພາປະຊາຊົນແຂວງ ເຊິ່ງໃນໄລຍະ 1 ປີ ຜ່ານມາ ຄະນະເລຂາທິການສະພາປະຊາຊົນແຂວງໄດ້ພະຍາຍາມເອົາໃຈໃສ່ຈັດຕັ້ງປະຕິບັດພາລະບົດບາດຂອງຕົນຕາມການຊີ້ນຳຂອງຄະນະປະຈຳສະພາປະຊາຊົນແຂວງ, ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານມີຜົນສຳເລັດເປັນຢ່າງດີ ໃນການເປັນເສນາທິການທາງດ້ານການກະກຽມດ້ານເນື້ອໃນໃຫ້ແກ່ຄະນະປະທານ, ຄະນະປະຈຳ ແລະ ບັນດາຄະນະກຳມະການຂອງສະພາປະຊາຊົນແຂວງ ແລະ ການອຳນວຍຄວາມສະດວກທາງດ້ານວັດຖຸອຸປະກອນ, ງົບປະມານຮັບໃຊ້ ແລະ ວຽກງານປິ່ນອ້ອມອື່ນໆ, ໃນທິດທາງແຜນການປີ 2023ຂອງຄະນະເລຂາທິການສະພາປະຊາຊົນແຂວງຈະເອົາໃຈໃສ່ພົວພັນປະສານງານ, ອຳນວຍຄວາມສະດວກຮອບດ້ານ ໃຫ້ແກ່ສະພາປະຊາຊົນແຂວງ, ຄະນະປະຈຳ ແລະ ບັນດາຄະນະກຳມະການຂອງສະພາປະຊາຊົນແຂວງ, ສືບຕໍ່ປັບປຸງກົງຈັກການຈັດຕັ້ງຂອງສະພາປະຊາຊົນແຂວງຕາມແຜນການສ້າງ ແລະ ປັບປຸງພະນັກງານໃຫ້ສອດຄ່ອງຕາມສະພາບ ແລະເງື່ອນໄຂຕົວຈິງ.

ໃນທີ່ປະຊຸມ, ທ່ານ ວຽງໄຊ ສີວິໄລ ໄດ້ມີຄຳເຫັນໂອ້ລົມຕໍ່ຄະນະເລຂາທິການ ກໍຄືພະນັກງານສະພາປະຊາຊົນແຂວງ ຈົ່ງສືບຕໍ່ປັບປຸງເນື້ອໃນຮ່າງບົດລະຫຼູບ ປະຈຳປີ 2022 ໃຫ້ມີຄວາມຄົບຖ້ວນສົມບູນຕື່ມອີກ, ຈົ່ງສືບຕໍ່ພັດທະນາຕົນເອງໃນການການຊອກຮູ້ຮໍ່າຮຽນວຽກງານຈາກດ້ານຕ່າງໆ ເພື່ອນຳໃຊ້ເຂົ້າວຽກງານໃຫ້ດີຂຶ້ນກວ່າເກົ່າ,ເອົາໃຈໃສ່ຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ ໃຫ້ຖືກຕ້ອງຕາມຂັ້ນເທິງວາງອອກ ແລະ ຮັກສາມູນເຊື້ອຄວາມສາມັກຄີພາຍໃນໃຫ້ດີຂຶ້ນກວ່າເກົ່າ.

(ນາງ ສຸກສະຫວັນ ອິນທະແສງ)

## ຍົກສູງຄຸນນະພາບທາງດ້ານເນື້ອໃນ ໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 4

(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ (ສພຂ) ອັດຕະປື ໄດ້ສຳເລັດລົງດ້ວຍໝາກຜົນອັນຈົບງາມ ໃນວັນທີ 10 ກຸມພາຜ່ານມາ ເຊິ່ງກ່ອນໜ້ານັ້ນ ເມື່ອວັນທີ 3 ກຸມພາ 2023 ໄດ້ຈັດກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ຊຸດທີ II ທີ່ຫ້ອງປະຊຸມຂອງຕົນ ໂດຍການເປັນປະທານຂອງທ່ານ ນາງ ມີນາພອນ



ໄຊສົມພູ ປະທານ ສພຂ ອັດຕະປື; ມີບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ 5

ອ່ານຕໍ່ໜ້າ 7

## ຖະແຫຼງຂ່າວຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງບໍລິຄຳໄຊ

(ສພຊ) ວັນທີ 2 ກຸມພາ 2023 ທີ່ສະພາປະຊາຊົນແຂວງບໍລິຄຳໄຊ, ທ່ານ ນາງ ຟອງສະໝຸດ ພົງວິຈິດ ເລຂາທິການສະພາປະຊາຊົນແຂວງ ໄດ້ຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ ຖະແຫຼງຂ່າວຕໍ່ສື່ມວນຊົນ ຊາບວ່າ: ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງບໍລິຄຳໄຊ ຊຸດທີ II ໄດ້ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າຂອງວັນທີ 31 ມັງກອນ ແລະ ອັດລົງໃນຕອນບ່າຍຂອງວັນທີ 2 ກຸມພາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ປອ. ສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງບໍລິຄຳໄຊ; ເຂົ້າຮ່ວມໂດຍທ່ານ ປອ. ກອງແກ້ວ ໄຊສິງຄາມ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງແຂວງບໍລິຄຳໄຊ, ມີບັນດາທ່ານຄະນະປະຈຳພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ອະດີດການນຳຂອງແຂວງ, ພະນັກງານອາວຸໂສບຳນານ, ຫົວໜ້າພະແນກການ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ອົງການລັດທຽບເທົ່າຂັ້ນແຂວງ, ວິສາຫະກິດ ທັງພາກລັດ ແລະ ເອກະຊົນ, ພິເສດ ກອງປະຊຸມ ຍັງໄດ້ຕ້ອນຮັບທ່ານ ນາງ ປິ່ງຄຳ ລາຊະສິມມາ ຄະນະປະຈຳສະພາແຫ່ງຊາດ, ເລຂາທິການສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ.



ກອງປະຊຸມໃນຄັ້ງນີ້ໄດ້ຮັບຟັງການລາຍງານ ແລະ ຮັບຮອງເອົາບັນຫາສຳຄັນຕ່າງໆຂອງແຂວງ ຄື: ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ຮັບຮອງເອົາບົດລາຍງານຂອງອົງການກວດສອບປະຈຳພາກກາງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022, ທິດທາງແຜນການ ປະຈຳປີ 2023 ແລະ ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານ ປະຈຳປີ 2021 ແລະ ການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022, ທິດທາງແຜນການ ປະຈຳປີ 2023 ແລະ ການແກ້ໄຂຜົນການກວດສອບ ປີຜ່ານມາຂອງອົງການກວດກາລັດ; ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ວຽກງານກໍ່ສ້າງຮາກຖານ ຕິດພັນກັບວຽກງານສາມສ້າງ ໃນໄລຍະປີ 2020-2022 ແລະ ທິດທາງແຜນການ ປະຈຳປີ 2023-2025; ຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ; ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງສະພາປະຊາຊົນແຂວງ; ຮັບຮອງເອົານິຕິກຳຂອງແຂວງ ຈຳນວນ 3 ສະບັບ, ໃນນັ້ນ ສ້າງໃໝ່ 2 ສະບັບ, ປັບປຸງ 1 ສະບັບ; ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງບໍລິຄຳໄຊ ວ່າດ້ວຍການປະເມີນລາຄາທີ່ດິນ ຂອງແຂວງ (ສະບັບປັບປຸງ); ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງບໍລິຄຳໄຊ ວ່າດ້ວຍກອງທຶນທານຸເຄາະເພື່ອຊ່ວຍເຫຼືອສັງຄົມ (ສະບັບສ້າງໃໝ່); ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງບໍລິຄຳໄຊ ວ່າດ້ວຍນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍຜົນກະທົບ ຕໍ່ຊັບສິນຈາກການສຳປະທານກໍ່ສ້າງໂຮງງານເຫຼັກກ້າບ້ານຫາດໄຄ້ ແລະ ບ້ານທ່າບົກ, ເມືອງທ່າພະບາດ ແຂວງບໍລິຄຳໄຊ (ສະບັບສ້າງໃໝ່).

ກອງປະຊຸມຍັງໄດ້ຮັບຟັງການອະທິບາຍ, ຊີ້ແຈງຈາກການນຳຂອງແຂວງ, ພະແນກການທີ່ກ່ຽວຂ້ອງ ຕໍ່ກັບຄຳສະເໜີຂອງສະມາຊິກສະພາປະຊາຊົນແຂວງ ທີ່ຕາງໜ້າໃຫ້ແກ່ປະຊາຊົນບັນດາເຜົ່າ ໃນທົ່ວແຂວງ; ພ້ອມນີ້, ໃນໄລຍະດຳເນີນກອງປະຊຸມ ຍັງໄດ້ຮັບຄຳສະເໜີຂອງປະຊາຊົນຜ່ານສາຍດ່ວນ ໝາຍເລກ 054 156 ມີຈຳນວນ 11 ສາຍ, ສັງລວມແລ້ວມີ 11 ເລື່ອງ.

ຕໍ່ຜົນສຳເລັດອັນຈົບງາມຂອງກອງປະຊຸມ, ກໍຍ້ອນບັນດາທ່ານສະມາຊິກສະພາປະຊາຊົນແຂວງ, ຜູ້ແທນກອງປະຊຸມ, ຄະນະຮັບຜິດຊອບກະກຽມກອງປະຊຸມ ໄດ້ເຊີດຊູຄວາມຮັບຜິດຊອບ, ເປັນເຈົ້າການ ໃນການຄົ້ນຄວ້າປະກອບຄຳຄິດຄຳເຫັນ ຢ່າງກົງໄປກົງມາ, ມີເຫດມີຜົນ, ມີເນື້ອໃນທີ່ໜັກແໜ້ນເລິກເຊິ່ງ, ມີຈຸດສຸມ, ຖືກຕ້ອງສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍ ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ; ພ້ອມນີ້ ການນຳຂອງແຂວງ, ພະແນກການທີ່ກ່ຽວຂ້ອງ ກໍມີຄວາມຈິງໃຈ, ອະທິບາຍ, ຊີ້ແຈງ ດ້ວຍເຫດດ້ວຍຜົນ ແລະ ຮັບເອົາຄວາມຄິດເຫັນຂອງຜູ້ແທນ ໄປພິຈາລະນາເພື່ອປັບປຸງແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງໃນຂະແໜງການຂອງຕົນ ເພື່ອສ້າງບາດກ້າວໃໝ່ໃນການຍົກສູງຄຸນນະພາບ ການບໍລິຫານ ແລະ ຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ແລະຮັບໃຊ້ປະຊາຊົນຢ່າງແທ້ຈິງ.

(ນາງ ໂສລະຢ້າ ໄຊຍະວົງ)

# ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຮ່ວມກັບ ບໍລິສັດ ຊີໂນ-ອາກຣີ ໂປຕາສ ຈຳກັດ



(ສພຊ) ໃນວັນທີ 11 ກຸມພາ 2023 ທ່ານ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງຄຳມ່ວນ ພ້ອມດ້ວຍຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກທີ 12 ແຂວງຄຳມ່ວນ ຊຸດທີ IX ແລະ ຄະນະສະມາຊິກສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຮ່ວມກັບ ບໍລິສັດ ຊີໂນ-ອາກຣີ ໂປຕາສ ຈຳກັດ ທີ່ບ້ານ ດົງໃຕ້ ເມືອງທ່າແຂກ ແຂວງຄຳມ່ວນ ໂດຍໄດ້ຮັບການຕ້ອນຮັບຢ່າງອົບອຸ່ນຈາກທ່ານ ໂຖງຢົງເຫີງ ຜູ້ອຳນວຍການບໍລິສັດ ຊີໂນ-ອາກຣີ ໂປຕາສ ຈຳກັດ ແລະ ພະນັກງານພາຍໃນບໍລິສັດດັ່ງກ່າວ.

ໃນໂອກາດນີ້, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ຮັບຟັງການລາຍງານຫຍໍ້ກ່ຽວກັບສະພາບໂດຍລວມຂອງບໍລິສັດ ຊີໂນ-ອາກຣີ ໂປຕາສ ຈຳກັດ ເຊິ່ງເປັນບໍລິສັດລະດັບສາກົນທີ່ດຳເນີນການຂຸດຄົ້ນແຮ່ເກືອໂປຕາສ, ຜະລິດເກືອໂປຕາສ (ປຸ໋ຍໂປຕາສ) ແລະ ຈຳໜ່າຍເກືອໂປຕາສ. ໃນຂົງເຂດໃໝ່ຂອງການຜະລິດເກືອໂປຕາສໃນໂລກ, ຜະລິດຕະພັນເກືອໂປຕາສຂອງບໍລິສັດ ສົ່ງອອກຈຳໜ່າຍຢູ່ຫຼາຍປະເທດເຊັ່ນ: ຈີນ, ຫວຽດນາມ, ອິນໂດເນເຊຍ, ໄທ, ມາເລເຊຍ, ອິນເດຍ, ນິວຊີແລນ, ຍີ່ປຸ່ນເປັນຕົ້ນ; ການພັດທະນາຂອງບໍລິສັດເປັນຜູ້ສະໜອງເກືອໂປຕາສລະດັບສາກົນ, ເພື່ອສະໜອງເກືອໂປຕາສຄຸນນະພາບສູງໃຫ້ແກ່ການຜະລິດກະເສດຂອງເອເຊຍແລະຂອງໂລກ ໂດຍບໍລິສັດດັ່ງກ່າວໄດ້ຊຸກຍູ້ການສ້າງວຽກເຮັດງານທຳແກ່ທ້ອງຖິ່ນ, ໄດ້ຈັດຕັ້ງຫຼາກຫຼາຍກິດຈະກຳ ວັດທະນະທຳວິສາຫະກິດ, ເພື່ອເສີມສ້າງທີມງານທີ່ສາມັກຄີກົມກຽວ,ເພື່ອພ້ອມກັນພະຍາຍາມສູ້ຊົນບັນລຸຄາດໝາຍໂຄງການປອດໄພ, ສີຂຽວ, ເປັນມິດກັບສິ່ງແວດລ້ອມ ແລະ ພັດທະນາຍືນຍົງ.

ໂອກາດດຽວກັນນີ້, ປະທານສະພາປະຊາຊົນແຂວງ ແລະ ຄະນະ ໄດ້ເຄື່ອນໄຫວຢ້ຽມຢາມບ້ານຊຽງແຫວ ເມືອງທ່າແຂກ ທີ່ບໍລິສັດຊີໂນ-ອາກຣີ ໂປຕາສ ຈຳກັດ ຊ່ວຍພັດທະນາ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃນບ້ານດັ່ງກ່າວ ແລະ ໄດ້ຮັບຟັງລາຍລະອຽດຂອງແຜນດຳເນີນງານເພື່ອສຶກສາໂຄງການ ພັດທະນາ ແລະ ຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນ ຈາກຕາງໜ້າບໍລິສັດ ຊີໂນ-ອາກຣີ ໂປຕາສ ຈຳກັດ ໂດຍແຜນພັດທະນາບັນດາໂຄງການຕ່າງໆຄື: ໂຄງການປູກຝັງ, ໂຄງການລ້ຽງສັດ, ໂຄງການຈັດຫາງານ ແລະ ໂຄງການພັດທະນາການທ່ອງທ່ຽວ ບົນພື້ນຖານອີງໃສ່ເງື່ອນໄຂທ່າແຮງ ແລະ ຈຸດພິເສດພູມສັນຖານຂອງບ້ານ.

ໃນຕອນທ້າຍ ທ່ານ ບຸນມີ ພິມມະສອນ ໄດ້ມີຄຳເຫັນໂອ້ລົມ ແລະ ສະເໜີໃຫ້ບໍລິສັດເອົາໃຈໃສ່ປະຕິບັດ ໂຄງການລົງທຶນຕາມກົດໝາຍກຳນົດ; ເອົາໃຈໃສ່ການປະຕິບັດພັນທະຕາມກົດໝາຍກຳນົດ ກໍຄືໃຫ້ຮັບປະກັນ 3 ຜົນປະໂຫຍດ ເປັນຕົ້ນ ຜົນປະໂຫຍດລວມຂອງປະເທດຊາດ, ຜົນປະໂຫຍດຂອງຜູ້ລົງທຶນ ແລະ ຜົນປະໂຫຍດຂອງທ້ອງຖິ່ນ, ຄຽງຄູ່ກັນນັ້ນ ເອົາໃຈໃສ່ວຽກງານການປົກປັກຮັກສາ ສິ່ງແວດລ້ອມທຳມະຊາດ, ເນື່ອງຈາກວ່າ ການລົງທຶນຂຸດຄົ້ນບໍ່ແຮ່ ມີການນຳໃຊ້ເຕັກນິກເຕັກໂນໂລຊີ ທີ່ທັນສະໄໝ ຊຶ່ງອາດສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຄຸນນະພາບຂອງປະຊາຊົນໃນການດຳລົງຊີວິດ. ພ້ອມນັ້ນ, ທ່ານຍັງໄດ້ໄດ້ສະແດງຄວາມຍ້ອງຍໍຊົມເຊີຍມາຍັງບໍລິສັດຊີໂນ-ອາກຣີໂປຕາສ ຈຳກັດ ໃນນາມນັກລົງທຶນຕ່າງປະເທດ ທີ່ໄດ້ກຳນົດແຜນດຳເນີນງານໂຄງການເພື່ອຈະຊ່ວຍເຫຼືອພັດທະນາ ແລະ ປັບປຸງແກ້ໄຂຄວາມທຸກຍາກຂອງປະຊາຊົນ ບ້ານ ຊຽງແຫວນໃຫ້ມີຊີວິດດີຂຶ້ນ ແລະ ຈະກາຍເປັນບ້ານພັດທະນາຕົວແບບໃນຕໍ່ໜ້າ ທັງໄດ້ຮຽກຮ້ອງໃຫ້ທຸກພາກສ່ວນອີງການຈັດຕັ້ງບ້ານ ແລະ ພໍ່, ແມ່ປະຊາຊົນຈົ່ງສາມັກຄີກັນ ເອົາໃຈໃສ່ໃຫ້ການສະໜັບສະໜູນ ແລະ ມີສ່ວນຮ່ວມເຂົ້າໃນການພັດທະນາຊີວິດການເປັນຢູ່ ຮ່ວມກັບບໍລິສັດໃນການພັດທະນາບ້ານຊ່ອງຂອງຕົນເອງໃຫ້ມີຄວາມຈະເລີນກ້າວໜ້າ.

(ເອື້ອ ມະໂນສິງ)



# ກອງປະຊຸມຄົບຄະນະ ປະຈຳປີ 2023 ຂອງ 3 ຄະນະກຳມະການສະພາປະຊາຊົນແຂວງສາລະວັນ



(ສພຊ) ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ຄຍປປ), ຄະນະກຳມະການເສດຖະກິດ,ແຜນການ ແລະ ການເງິນ (ຄສຜງ), ແລະ ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ຄວສຜ) ຂອງສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ເປີດກອງປະຊຸມຄົບຄະນະ ປະຈຳປີ 2022 ແລະ ວາງທິດທາງແຜນການ ປະຈຳປີ 2023 ເປີດຂຶ້ນຕອນເຊົ້າຂອງວັນທີ 6 ກຸມພາ 2023 ຢູ່ທີ່ຫ້ອງປະຊຸມສະໂມສອນຂອງເມືອງສາລະວັນ ໂດຍການເປັນປະທານເປີດກອງປະຊຸມຂອງທ່ານ ນາງສູນໄຖ ໄຊຍະແສງ ຮອງປະທານ ສພຂ ແລະ ເຂົ້າຮ່ວມໂອ້ລົມຂອງທ່ານ ສີເຮັງ ຫອມສົມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ປະທານ ສພຂ ສາລະວັນ; ເຂົ້າຮ່ວມມີບັນດາທ່ານປະທານ-ຮອງປະທານ ສພຂ, ຜູ້ຊີ້ນຳແຕ່ລະຂົງເຂດ 3 ຄະນະກຳມະການ, ມີປະທານ-ຮອງປະທານຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ທີ່ສັງກັດໃນແຕ່ລະຄະນະກຳມະການ, ຄະນະເລຂາທິການ, ມີຫົວໜ້າ-ຮອງຫົວໜ້າພະແນກການ-ຮອງພະແນກການ, ກົມກອງ ແລະ ອົງການຈັດຕັ້ງມະຫາຊົນຕະຫຼອດຮອດພະນັກງານ ສພຂ ມີຜູ້ເຂົ້າຮ່ວມທັງໝົດ 100 ທ່ານ.

ກອງປະຊຸມໃນຄັ້ງນີ້ ແມ່ນເພື່ອເປັນການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ມາດຕາ 73 ກ່ຽວກັບກອງປະຊຸມຄົບຄະນະກຳມະການ ແລະ ເພື່ອເປັນການສະຫຼຸບ ແລະ ຕີລາຄາຄືນ ຕໍ່ຜົນງານທີ່ພົ້ນເດັ່ນ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບາງບົດຮຽນທີ່ຖອດຖອນໄດ້ຂອງ 3 ຄະນະກຳມະການ ໃນໄລຍະ 1 ປີທີ່ຜ່ານມາ.

ໃນວາລະຂອງກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງ ຄສຜງ ຜ່ານໂດຍທ່ານ ນາງ ອາລຸນນີ ອາດວິໄລ ຮອງປະທານ ຄສຜງ; ຮັບຟັງການຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງ ຄວສຜ ຜ່ານໂດຍທ່ານ ນາງ ທອງໃບ ໄຊຍະສານ ປະທານ ຄວຜງ; ຮັບຟັງການຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງ ຄຍປປ ຜ່ານໂດຍທ່ານ ສຸກສະຫວັນ ຈັນທິສຸກ ປະທານ ຄຍປປ; ຫຼັງຈາກນັ້ນ, ປະທານໄດ້ເປີດໂອກາດໃຫ້ບັນດາທ່ານຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ໄດ້ປະກອບຄຳຄິດຄຳເຫັນບາງວຽກງານທີ່ຕິດພັນກັບຂົງເຂດວຽກງານ ເຂົ້າໃສ່ຮ່າງເນື້ອໃນບົດສະຫຼຸບດັ່ງກ່າວ ເພື່ອເປັນເອກະພາບຮ່ວມກັນດ້ານເນື້ອໃນໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ເປັນບ່ອນອີງໃຫ້ສາມາດຈັດຕັ້ງປະຕິບັດຕາມ 3 ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ 3 ຄະນະກຳມະການ ແລະ ພາກສ່ວນທີ່ກ່ຽວຂ້ອງໃນແຕລະຂົງເຂດ ໃນປີຕໍ່ໜ້າໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

ຕອນທ້າຍ, ທ່ານ ສີເຮັງ ຫອມສົມບັດ ໄດ້ໂອ້ລົມ ແລະ ຊີ້ນຳຕໍ່ກອງປະຊຸມຄັ້ງນີ້ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍ ແລະ ຊົມເຊີຍຕໍ່ຜົນງານທີ່ພົ້ນເດັ່ນຂອງ 3 ຄະນະກຳມະການ ຍາດມາໄດ້ໃນ 1 ປີທີ່ຜ່ານມາ ທັງໄດ້ເນັ້ນໃຫ້ 3 ຄະນະກຳມະການ ສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດ 3 ພາລະບົດບາດຂອງຕົນທີ່ກຳນົດໄວ້ໃນມະຕິຂອງຄະນະປະຈຳ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ພ້ອມເນັ້ນໃຫ້ທຸກຂົງເຂດຕ້ອງເພີ່ມທະວີຢ່າງເປັນເຈົ້າການປະຕິບັດໜ້າທີ່ການເມືອງຂອງຕົນ ສູ້ຊົນປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ເປັນຮູບປະທຳ ແລະ ມີຜົນສຳເລັດ ໂດຍສະເພາະວຽກງານການເງິນສືບຕໍ່ປະຕິບັດຈັດເກັບລາຍຮັບເຂົ້າງົບປະມານໃຫ້ໄດ້ຕາມແຜນທີ່ກຳນົດໄວ້, ວຽກງານສຶກສາທິການ ສືບຕໍ່ຕິດຕາມ ແລະ ຊຸກຍູ້ນັກຮຽນຊັ້ນຕ່າງໆເຂົ້າຮຽນຢ່າງເປັນປົກກະຕິແລະວຽກງານແກ້ໄຂປາກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນໃນສັງຄົມໃຫ້ໝົດໄປເທື່ອລະກ້າວ.

(ດີລຳພົນ ພົມມະຈັນ)

## ຍົກສູງ...

(ຕໍ່ຈາກໜ້າ 6)

ເມືອງຂອງແຂວງ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.

ທັງນີ້, ກໍເພື່ອຮັບປະກັນໃຫ້ບັນດາເນື້ອໃນທີ່ຈະນຳສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ຊຸດທີ II, ເພື່ອຮັບການຄົ້ນຄວ້າປະກອບຄຳຄິດຄຳເຫັນຈາກບັນດາທ່ານສະມາຊິກສະພາປະຊາຊົນແຂວງ ແລະ ສ້າງຄວາມເປັນເອກະພາບຕໍ່ເນື້ອໃນຕ່າງໆໃຫ້ເລິກເຊິ່ງ, ເພື່ອຍົກສູງປະສິດທິພາບໃນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ແນໃສ່ເຮັດໃຫ້ການພິຈາລະນາ ແລະ ຮັບຮອງເນື້ອໃນກອງປະຊຸມມີຄຸນນະພາບ ຮັບປະກັນການປະຕິບັດພາລະບົດບາດຂອງສະພາປະຊາຊົນຂັ້ນແຂວງ, ເພື່ອເຮັດໃຫ້ພະແນກການ, ອົງການທຽບເທົ່າ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ແລກປ່ຽນຄຳຄິດຄຳເຫັນ ແລະ ເຂົ້າໃຈເປັນເອກະພາບຕໍ່ບັນດາເນື້ອໃນບົດລາຍງານ ແລະ ກົດໝາຍທີ່ມີລັກສະນະວິຊາການ, ຮັບປະກັນການປະຕິບັດພາລະບົດບາດຂອງແຕ່ລະພາກສ່ວນຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍກຳນົດ.

ກອງປະຊຸມໄດ້ຮັບຟັງລາຍງານກ່ຽວກັບການກະກຽມເນື້ອໃນທີ່ຈະນຳເຂົ້າຄົ້ນຄ້ວາພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ, ສະເໜີແບ່ງຄວາມຮັບຜິດຊອບໃຫ້ສະມາຊິກສະພາປະຊາຊົນແຂວງ ໃນການມີຄຳເຫັນໃສ່ແຕ່ລະວຽກໃນວາລະກອງປະຊຸມ, ຜ່ານຮ່າງຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍການສ້າງຕັ້ງ ແລະ ຄຸ້ມຄອງກິດຈະການຟາມສັດລ້ຽງພາຍໃນແຂວງ, ຜ່ານຮ່າງຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ຢາປາບສັດຕູພືດພາຍໃນແຂວງ.

(ວິນັດ)




# ກົດໝາຍ ວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ...

**ພາກທີ V**
**ຂໍ້ຫ້າມ**

**ມາດຕາ 50 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຊື້ ຂາຍ, ແລກປ່ຽນ, ນຳເຂົ້າ-ສົ່ງອອກ, ຊຸກເຊື່ອງ, ຄອບຄອງ, ນຳໃຊ້, ທຳລາຍ ອາວຸດ ແລະ ວັດຖຸລະເບີດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ນຳໃຊ້ ອາວຸດ ແລະ ວັດຖຸລະເບີດ ເຂົ້າໃນການລ່າສັດປ່າ, ສັດນ້ຳ ແລະ ອື່ນໆ;
3.ນຳໃຊ້ອາວຸດພື້ນເມືອງໂດຍບໍ່ຖືກຕ້ອງຕາມກົດໝາຍ;
4. ດຳເນີນທຸລະກິດ ກ່ຽວກັບ ອາວຸດ ແລະ ວັດຖຸລະເບີດ ໂດຍບໍ່ໄດ້ຮັບອະນຸຍາດ;
5. ນຳເຂົ້າ, ນຳໃຊ້ ຫຼື ມີໄວ້ຄອບຄອງ ວັດຖຸລະເບີດ, ອາວຸດເຄມີ, ຊີວະພາບ ແລະ ນິວເຄຼຍ;
6. ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ນຳໃຊ້ດອກໄມ້ໄຟ ໂດຍບໍ່ໄດ້ຮັບອະນຸຍາດ;
7. ປະດິດ, ດັດແປງສະພາບເຕັກນິກ, ຮູບຮ່າງ, ສີ ແລະ ໂຄງປະກອບຂອງອາວຸດ ທຸກຊະນິດ ແລະ ວັດຖຸລະເບີດ ໂດຍບໍ່ໄດ້ຮັບອະນຸຍາດ;
8. ສ້າງອຸປະສັກ ຫຼື ຂັດຂວາງ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ;
9. ປອມແປງ ແລະ ທຳລາຍ ເອກະສານ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ;
10. ຖືອາວຸດທຸກປະເພດ ເຂົ້າໄປໃນສະຖານທີ່ສາທາລະນະ ໂດຍບໍ່ໄດ້ຮັບອະນຸຍາດ;
11. ໃຫ້ສິນບົນແກ່ເຈົ້າໜ້າທີ່ຫຼືພະນັກງານທີ່ກ່ຽວຂ້ອງ;
12. ລັກລອບ ນຳເຂົ້າ, ຊື້ ຂາຍ ຊິ້ນສ່ວນຕ່າງໆ ທີ່ສາມາດນຳມາປະດິດເປັນ ອາວຸດ ແລະ ວັດຖຸລະເບີດ;
13. ຊື້ ຂາຍ, ນຳເຂົ້າ-ສົ່ງອອກ, ຄອບຄອງ, ເຄື່ອງມືຊ່ວຍໝູນ ໂດຍບໍ່ໄດ້ຮັບອະນຸຍາດ;
14. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 51 ຂໍ້ຫ້າມ ສຳລັບຜູ້ດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ**

ຫ້າມ ຜູ້ດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ໂດຍບໍ່ໄດ້ຮັບອະນຸຍາດ;

ອ່ານຕໍ່ສະບັບໜ້າ...




## ວິທີເຮັດວຽກ

ຍ້ອນວ່າມີພະຍາດໃຈແຄບ ພະນັກງານຜູ້ທີ່ຊັ້ນສູງສົ່ງມານັ້ນ ຕາມທຳມະດາມັກອວດໂຕ, ດູຖູກພະນັກງານທ້ອງຖິ່ນ, ຖືວ່າພະນັກງານທ້ອງຖິ່ນໂງ່ຈ້າກວ່າຕົນ, ແລ້ວກໍເລີຍບໍ່ຮ່ວມມືກັນ, ຢ່າງສະໜິດສະໜົມ.

ຕໍ່ໄປ, ຖ້າຫາກມີການວຸ້ນວາຍແນວນັ້ນຂຶ້ນອີກ, ກໍແມ່ນພະນັກງານຜູ້ຖືກສົ່ງໄປນັ້ນ ຕ້ອງຮັບຄວາມຜິດໜັກກວ່າ, ເປັນຕົ້ນພະນັກງານຊັ້ນນຳ.

ພະນັກງານສອງຊະນິດນັ້ນ ຕ້ອງລວມເຂົ້າເປັນກຸ່ມກ້ອນອັນດຽວ ບໍ່ແຍກອອກຈາກກັນ ບໍ່ສຽດສີກັນ ຕ້ອງພ້ອມກັນແກ້ໄຂດັດແປງພະຍາດໃຈແຄບໃຫ້ຈົນໝົດກ້ຽງ.

ພະນັກງານທະຫານ ກັບພະນັກງານທ້ອງຖິ່ນກໍຄືກັນ, ຕ້ອງສາມັກຄີເປັນຈິດໜຶ່ງໃຈດຽວກັນ, ຕ້ອງຊ່ວຍເຫຼືອເຊິ່ງກັນແລະກັນ. ພະນັກງານທະຫານທີ່ຢູ່ໃນທ້ອງຖິ່ນໜຶ່ງນັ້ນ ຕາມທຳມະດາມັກມີຖານະນຳພາ, ເພາະມີສິດ ແລະ ກຳລັງຢູ່ໃນມື ເພາະສະນັ້ນຕໍ່ໄປນີ້, ຖ້າຫາກວ່າມີຄວາມບໍ່ຖືກຕ້ອງກັນເກີດຂຶ້ນໃນລະຫວ່າງສອງຝ່າຍ, ກໍແມ່ນພະນັກງານທະຫານເປັນຜູ້ຮັບຜິດຊອບຫຼາຍກວ່າ.

ກອງທະຫານກອງນີ້ກັບກອງອື່ນ, ທ້ອງຖິ່ນນີ້ກັບທອງຖິ່ນອື່ນ, ສຳນັກງານນີ້ກັບສຳນັກງານອື່ນກໍຄືກັນ, ກໍລ້ວນແຕ່ຕ້ອງຕ້ານຢັບພະຍາດໃຈແຄບ ແລະ ພະຍາດທ້ອງຖິ່ນໃຫ້ຈົນໝົດ. ຕົວຢ່າງ ກໍຄື: ບໍ່ຢາກໃຫ້ຊັ້ນສູງຍົກຍ້າຍພະນັກງານຂອງຕົນໄປບ່ອນອື່ນ ຖ້າຂືນບໍ່ໄດ້ ຈຳເປັນຕ້ອງຍົກຍ້າຍ, ກໍເລືອກເອົາຜູ້ອ່ອນຄວາມສາມາດໄປໃຫ້ ເມື່ອມີສິ່ງຂອງອັນໃດເຫຼືອ ຫຼື ຕົນເອງບໍ່ທັນຕ້ອງການໃຊ້ ກໍມັກຊຸກເຊື່ອງໄວ້, ບໍ່ໃຫ້ຊັ້ນສູງຮູ້ ບໍ່ຢາກແບ່ງປັນບ່ອນອື່ນ ດັ່ງນັ້ນເປັນຕົ້ນ.

ພະຍາດທ້ອງຖິ່ນດັ່ງກ່າວນັ້ນ ຕ້ອງຂຸດເກົ່າອອກໃຫ້ໝົດກ້ຽງ

ນອກຈາກນັ້ນ ຍັງມີບັນຫາພະນັກງານເກົ່າ ແລະ ພະນັກງານໃໝ່ຕື່ມອີກ.

ພັກເຮົາຂະຫຍາຍກວ້າງຂວາງອອກ ກໍຕ້ອງການໃຫ້ມີພະນັກງານໃໝ່ຫຼາຍຂຶ້ນເລື້ອຍໆ ຍ້ອນວ່າພະນັກງານເກົ່າທີ່ມີຈຳນວນໜ້ອຍ ບໍ່ພຽງພໍໃຫ້ພັກໃຊ້ວຽກ. ອີກປະການໜຶ່ງ, ຕາມກົດເກນທຳມະຊາດ ຄົນເກົ່າຕ້ອງເຖົ້າ, ຄົນເກົ່າຕ້ອງອ່ອນ, ອ່ອນລົງຫຼາຍຕ້ອງຕາຍ, ຖ້າບໍ່ມີພະນັກງານໃໝ່ເຂົ້າປ່ຽນນັ້ນແມ່ນໃຜຈະແບກຫາບວຽກການຂອງພັກຕໍ່ໄປ. ເພາະສະນັ້ນ ພະນັກງານເກົ່າຕ້ອງຊຸມເຊີຍ ສັ່ງສອນ, ຊັກຈູງ ແລະ ຮັກແພງພະນັກງານໃໝ່, ເປັນທຳມະດາ ທີ່ພະນັກງານໃໝ່ເຮັດວຽກບໍ່ທັນເຫິງ, ບົດຮຽນຍັງມີໜ້ອຍ, ຂໍ້ບົກພ່ອງຍັງມີຫຼາຍ ແຕ່ວ່າເຂົາຊ້ຳພັດມີຂໍ້ດີກວ່າພະນັກງານເກົ່າຢູ່ບ່ອນວ່າຍັງໜຸ່ມ, ວ່ອງໄວ ແລະ ມັກມີຫົວຄິດປະດິດສ້າງຫຼາຍກວ່າ.

ເພາະສະນັ້ນ, ທັງສອງຝ່າຍຕ້ອງເຄົາລົບນັບຖືກັນ, ຊ່ວຍເຫຼືອກັນ, ຮ່ຳຮຽນນຳກັນ, ແລະ ສາມັກຄີກັນໃຫ້ແໜ້ນ.

ພະນັກງານເກົ່ານັ້ນ ຕາມທຳມະດາມັກມີຖານະນຳພາ. ເພາະສະນັ້ນ ຕໍ່ນີ້ໄປ ຖ້າວ່າໃນລະຫວ່າງພະນັກງານສອງຈຳນວນນີ້ ຫາກມີເລື່ອງບໍ່ຖືກຕ້ອງກັນຂຶ້ນ, ພະນັກງານເກົ່າຕ້ອງເປັນຜູ້ຮັບຜິດຊອບຫຼາຍກວ່າ. ເຮັດດັ່ງນັ້ນຈຶ່ງຈະແກ້ໄຂດັດແປງພະຍາດໃຈແຄບນີ້ໄດ້.

ອ່ານຕໍ່ສະບັບໜ້າ...

## ສຳເລັດ...

(ຕໍ່ຈາກໜ້າ 1)

ແຂວງຈຳປາສັກ ພ້ອມດ້ວຍບັນດາທ່ານສະມາຊິກສະພາປະຊາຊົນແຂວງຈຳປາສັກ ເຄື່ອນໄຫວພົບປະປະຊາຊົນ, ພະນັກງານການນຳ ແລະ ລັດຖະກອນຂອງແຂວງຈຳປາສັກ ໂດຍມີຈຸດເຄື່ອນໄຫວ 6 ຈຸດເຄື່ອນໄຫວ ໃນ 3 ເມືອງຄື: ເມືອງໂຂງ, ເມືອງມູນລະປະໂມກ ແລະ ເມືອງຈຳປາສັກ.

ການເຄື່ອນໄຫວຄັ້ງນີ້ແມ່ນເພື່ອລົງພົບປະຢ້ຽມຢາມປະຊາຊົນ ແລະ ພະນັກງານ-ລັດຖະກອນ ຜູ້ມີສິດເລືອກຕັ້ງ ຕິດພັນກັບການນຳເອົາເນື້ອໃນຜົນສຳເລັດຂອງການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງຈຳປາສັກ ຊຸດທີ II ທີ່ໄດ້ພິຈາລະນາ, ຮັບຮອງເອົາຫຼາຍບັນຫາສຳຄັນທີ່ເປັນພື້ນຖານຂອງຊາດ ແລະ ຂອງແຂວງຈຳປາສັກ ເຜີຍແຜ່ໃຫ້ພະນັກງານການນຳ ແລະ ພະນັກງານ-ລັດຖະກອນ ແລະ ປະຊາຊົນ ທັງ 3 ເມືອງຂອງແຂວງຈຳປາສັກ ໄດ້ຮັບຮູ້ເຂົ້າໃຈ ແລະ ນຳໄປຈັດຕັ້ງຜັນຂະຫຍາຍ ເຂົ້າໃສ່ການຈັດຕັ້ງປະຕິບັດວຽກງານ ຢ່າງໜັກແໜ້ນ ແລະ ເລິກເຊິ່ງ.

ໃນແຕ່ລະຈຸດທີ່ເຄື່ອນໄຫວ, ຄະນະ ໄດ້ຮັບຟັງການລາຍງານຫຍໍ້ກ່ຽວກັບສະພາບຈຸດພິເສດ, ການຈັດຕັ້ງແຜນພັດທະນາເສດຖະກິດ-ສັງຄົມ ຈາກບັນດາທ່ານຕາງໜ້າໃຫ້ອຳນາດການປົກຄອງຂັ້ນຕ່າງໆ ພ້ອມທັງໄດ້ຮັບຟັງຄຳຄິດເຫັນ, ຄຳສະເໜີຂອງປະຊາຊົນ ແລະ ພະນັກງານ-ລັດຖະກອນ ລ້ວນແຕ່ເປັນຄຳສະເໜີທີ່ພົວພັນເຖິງວຽກງານການຄຸ້ມຄອງບໍລິຫານລັດ, ການພັດທະນາເສດຖະກິດ-ສັງຄົມ, ການພັດທະນາທີ່ມີຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ແລະ ຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນ. ຕໍ່ກັບຄຳສະເໜີດັ່ງກ່າວ, ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ອະທິບາຍຕໍ່ບາງຄຳສະເໜີ ພິເສດ, ໃນວາລະທີ່ເປີດກອງປະຊຸມພົບປະກັບພະນັກງານການນຳ ແລະ ພະນັກງານ-ລັດຖະກອນ ຂອງອົງການປົກຄອງເມືອງໂຂງ, ອົງການປົກຄອງເມືອງມູນລະປະໂມກ ແລະ ອົງການປົກຄອງເມືອງຈຳປາສັກ ໄດ້ເຊື້ອເຊີນເອົາຕາງໜ້າຈາກ 5 ພະແນກການຂອງແຂວງຈຳປາສັກ ຄື: ພະແນກແຜນການ ແລະ ການລົງທຶນ, ພະແນກການເງິນ, ພະແນກສຶກສາທິການ ແລະ ກິລາ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮ່ວມລົງເຄື່ອນໄຫວນຳຄະນະ ແລະ ໄດ້ຊີ້ແຈງອະທິບາຍຕໍ່ຄຳສະເໜີດັ່ງກ່າວກັບທີ່, ສ່ວນຄຳສະເໜີທີ່ເປັນບັນຫາໃຫຍ່ ແລະ ບໍ່ສາມາດອະທິບາຍຊີ້ແຈງໄດ້ ກອງເລຂາກອງປະຊຸມທີ່ຕິດຕາມຄະນະໄດ້ບັນທຶກ ແລະ ສັງລວມຢ່າງລະອຽດ ເພື່ອນຳໄປລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ແລະ ຄະນະປະຈຳສະພາປະຊາຊົນແຂວງຈຳປາສັກ ຄົ້ນຄວ້າປຶກສາຫາລື ແລະ ຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງຄົ້ນຄວ້າແກ້ໄຂໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ.

ໃນໂອກາດທີ່ລົງມາເຄື່ອນໄຫວພົບປະປະຊາຊົນ ແລະ ເຮັດວຽກຢູ່ແຂວງຈຳປາສັກ ໃນຄັ້ງນີ້, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ໄດ້ຕີລາຄາສູງຕໍ່ໝາກຜົນຜົນງານທີ່ຂອງອຳນາດການປົກຄອງຂັ້ນຕ່າງໆຂອງທ້ອງ ຖິ່ນຍາດມາໄດ້ ແລະ ຮຽກຮ້ອງໃຫ້ພະນັກງານ-ລັດຖະກອນຂອງທຸກພາກສ່ວນ ຈົ່ງຮັກສາມູນເຊື້ອອັນດີງາມ ແລະພ້ອມກັນເພີ່ມທະວີຄວາມຮູ້ຄວາມສາມາດ, ເປັນເຈົ້າໃນການຈັດຕັ້ງປະຕິບັດໜ້າທີ່, ຄວາມຮັບຜິດຊອບຕາມການຈັດຕັ້ງມອບໝາຍໃຫ້ມີຜົນສຳເລັດຢ່າງມີປະສິດທິພາບສູງ, ເຮັດແທ້ ແລະ ທ່ວງທັນກັບເວລາ.

ພ້ອມນັ້ນ, ທ່ານຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ຍັງມອບເຄື່ອງຊ່ວຍເຫຼືອເປັນອຸປະກອນການສຶກສາ ແລະ ກິລາ, ເຄື່ອງໃຊ້ຫ້ອງການ ແລະ ງົບປະມານຈຳນວນໜຶ່ງ ເພື່ອຊຸກຍູ້ວຽກງານຂອງບັນດາບ້ານ ແລະ ອົງການປົກຄອງເມືອງທັງ 3 ເມືອງ; ຈາກນັ້ນ, ຍັງໄດ້ເຄື່ອນໄຫວຢ້ຽມຢາມຫໍມູນເຊື້ອ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂອງເມືອງໂຂງ, ຢ້ຽມເບິ່ງໂຄງການກໍ່ສ້າງຂົວຂ້າມນ້ຳບ້ານຫ້ວຍໄຜ່ ແລະ ໂຄງການກໍ່ສ້າງວົງວຽນຮູບຈຳລອງພຣະທາດສາມປາງ ຈຸດ 4 ແຍກຕະຫຼາດ ຂອງເມືອງສຸຂຸມາ ອີກດ້ວຍ.

(ສົມວິຈິດ ໄຊມົນຕີ)




# ວິທີຄິດ ນຳມາເຊິ່ງຄວາມສຳເລັດ

# ດົ້ນກົບເມກ

ບາງຄົນເກີດມາຈົນແລ້ວຮູ້ສຶກທໍ້ຖອຍ, ຮູ້ສຶກວ່າຕົນເອງຂາດທີ່ເພິ່ງ... ແຕ່ບາງຄົນທີ່ສຳເລັດ ຈະຄິດຕ່າງກັນ ເພາະເຂົາຈະຄິດສ້າງຄວາມເຂັ້ມແຂງໃຫ້ຕົນເອງ ແລ້ວຄ່ອຍລົງມືປະຕິບັດນັບຈາກວຽກນ້ອຍໄປຫາວຽກໃຫຍ່, ບາງຄົນຮຽນພຽງເພື່ອເອົາໃບປະກາດໄປສະໝັກວຽກ ແຕ່ບາງຄົນຕັ້ງໃຈຮຽນໃຫ້ເກີດຄວາມຮູ້ແທ້ຈິງ ເພື່ອໄປເຮັດທຸລະກິດ ຫຼື ສ້າງຕົວເອງດ້ວຍຄວາມຮູ້ຄວາມມີສິດລົ້ມເຫຼວດ້ວຍເຫດນັ້ນ ຄົນທີ່ເຂົາສຳເລັດເຂົາຈະມີວິທີຄິດໄຕ່ຕອງຫາເຫດຜົນ, ຊັ່ງຊາຜົນໄດ້ຜົນເສຍ ໂດຍໃຊ້ຄວາມພະຍາຍາມ ແລະ ຄວາມອົດທົນເປັນເຄື່ອງມືກ້າວໄປສູ່ເປົ້າໝາຍ, ມີຫຼາຍຄຸນສົມບັດຂອງຄົນສຳເລັດຄື: ເຂົາຈະຄິດຫາວິທີປັບປຸງພັດທະນາຕົນເອງຕະຫຼອດເວລາ ແຕ່ຄົນລົ້ມເຫຼວມັກບໍ່ປ່ຽນແປງຕົວເອງ ຮັກສາຮູບແບບເດີມເອົາໄວ້ ກໍຈະໄດ້ຮັບຜົນເກົ່າໆ ເພາະມີວິທີດຽວ.

ຖ້າເຮົາສັງເກດຊີວິດລັບຜູ້ລົ້ມເຫຼວ ຫຼື ຜູ້ບໍ່ພັດທະນາ ກໍຈະຢືມເງິນສ້າງໜີ້ເພີ່ມພຽງແຕ່ເອົາມາໃຊ້ຈ່າຍບໍລິໂພກໃຫ້ຮູ້ສຶກວ່າຕົວເອງຢູ່ດີກິນດີມີຖານະໂກ້ຫຼູໄປແຕ່ລະມື້ ຜູ້ຂຽນພຽງແຕ່ຍົກຕົວຢ່າງຂ້າງເທິງນັ້ນກໍຄົງເປັນທີ່ເຂົ້າໃຈໄດ້ວ່າ: ວິທີຄິດຂອງຄົນເຮົາຈະສຳເລັດ ຫຼື ລົ້ມເຫຼວມັນຕ່າງກັນ.

**ສັງລວມໄດ້ວ່າ:** ການທີ່ຈະປະສົບຜົນສຳເລັດ ມັນອາດບໍ່ຂຶ້ນກັບປະລິມານຄວາມຮູ້-ໃບປະລິນຍາສູງໆຢ່າງດຽວ ແຕ່ປັດໄຈສຳຄັນກວ່ານັ້ນຄືວິທີຄິດ-ຮູ້ຈັກຄິດຢ່າງສະຫຼາດ,



ສາມາດ ດັ່ງນັ້ນ, ວິທີຄິດຂອງຄົນເຮົາຈຶ່ງສຳຄັນຕັດສິນອະນາຄົດໄດ້.

ທ່ານຜູ້ອ່ານອາດມີວິທີຄິດແຕກຕ່າງກັນ ແຕ່ຄົນທີ່ປະສົບຜົນສຳເລັດ ເຂົາມີລັກສະນະຄິດບວກ; ເບິ່ງເຫັນຜົນດີຜົນເສຍ ຖ້າຕັດສິນໃຈພາດກໍຄົນໃນເລື່ອງການສ້າງອະນາຄົດ ບາງຄົນສ້າງໜີ້ (ຢືມເງິນ) ດ້ວຍເຫດຜົນຕ່າງກັນ ຜົນທີ່ໄດ້ຮັບຈຶ່ງອອກມາຕ່າງກັນ; ຄົນສຳເລັດຈະຢືມເງິນມາຕໍ່ຍອດລາຍໄດ້ສ້າງທຸລະກິດ; ລົງທຶນສ້າງຄວາມເຂັ້ມແຂງໝັ້ນຄົງໃຫ້ຊີວິດກ້າວໜ້າ ແຕ່ສຳທີຄິດ-ຮູ້ຈັກຄິດຢ່າງສະຫຼາດ, ຂະບວນການສຶກສາ-ຮຽນຮູ້ທີ່ດີບໍ່ແມ່ນສອນ ຫຼື ຮຽນໃຫ້ໄດ້ຄວາມຮູ້ຢ່າງດຽວ ແຕ່ສອນໃຫ້ຄິດເປັນຮູ້ຈັກເອົາຄວາມຮູ້ມາຄິດຕໍ່ຍອດຈຶ່ງເອີ້ນວ່າເປັນຜູ້ມີປັນຍາ!

# ບຸນມະຫາຊາດ

# ໂດຍ: ນາງ ສີດາ

ບຸນພະເວດສັນດອນ ຫຼື ທີ່ຄົນລາວພວກເຮົາເອີ້ນກັນຈົນຕິດປາກວ່າບຸນພະເຫວດນັ້ນເປັນປະເພນີດັ້ງເດີມທີ່ສືບເນື່ອງກັນມາເປັນເວລາດົນນານຄາດກັນວ່າໜ້າຈະເປັນປະເພນີທີ່ເລີ່ມຕົ້ນມາຕັ້ງແຕ່ສະໄໝເຈົ້າຟ້າງຸ່ມ ເພາະວ່າທ່ານເປັນຄົນທຳອິດທີ່ນຳເອົາສາດສະໜາພຸດເຂົ້າມາໃນປະເທດລາວ; ຄົນລາວເຊື່ອວ່າຖ້າຫາກຜູ້ໃດໄດ້ຟັງເທດສະໜາເລື່ອງພະເວດສັນດອນຈົນຄົບສິບສາມກັນ (ມີທັງໝົດໜຶ່ງພັນຄາຖາ) ຈົບໃນວັນດຽວຈະໄດ້ເກີດຮ່ວມພົບຮ່ວມຊາດດຽວກັນກັບພະສີອະລິຍະເມດໄຕ.

ຕາມປະເພນີດັ້ງເດີມນັ້ນ ບຸນພະເວດຈະຈັດກັນເປັນເວລາສາມວັນ, ວັນທຳອິດຈະເປັນການກະກຽມສະຖານທີ່ຕົກແຕ່ງວັດວາອາຮາມໃຫ້ງົດງາມ ແລ້ວສົມມຸດໄວ້ວ່າສະຖານທີ່ນີ້ ເປັນພະລາດຊະວັງພ້ອມກັບປຸກຜາມໄວ້ຕ້ອນຮັບພະສົງ ແລະ ຜູ້ຕິດຕາມພະສົງທີ່ຈະມາຈາກວັດອື່ນເພື່ອຊ່ວຍວຽກ ໃນການຕົບແຕ່ງນັ້ນຈະມີກົດຄື ບ່ອນທີ່ຈະຈັດພິທີຟັງເທດຟັງທຳນັ້ນຈະຕ້ອງປັກທຸງໄຊແປດຜືນ ໄວ້ແປດທິດ ສະເລ່ຍທິດລະຜືນ; ແຕ່ລະຈຸດທີ່ປັກທຸງນັ້ນຈະຕ້ອງມີກະຕ່າເອົາໄວ້ໃສ່ເຂົ້າພັນກ້ອນ, ຈະມີທຸງໄຊຜືນນ້ອຍໆຫ້ອຍໄວ້ໃນບໍລິເວນວັດ ແລະ ສາລາຟັງທຳລວມກັນໜຶ່ງພັນຜືນ; ວັນທີສອງແມ່ນຊາວບ້ານ, ພະພິຊຸສົງຂອງວັດເຈົ້າພາບຈັດງານ ແລະ ພະພິຊຸສົງວັດໃກ້ຄຽງ ຈະມາຮ່ວມກັນເຮັດພິທີເຊີນພະອຸປະຄຸດໃຫ້ມາປົກປ້ອງຄຸ້ມຄອງຂະບວນແຫ່; ຫຼັງຈາກນັ້ນ, ກໍເລີ່ມແຫ່ພະເວດ ແລະ ນາງມັດທີເຂົ້າເມືອງ (ຜ້າຜືນຍາວທີ່ຂຽນພາບເລົ່າເລື່ອງພະເວດສັນດອນ), ໃນການແຫ່ພະເວດ ແລະ ນາງມັດທີເຂົ້າເມືອງນີ້ມັກຈະມີການຮ້ອງລຳທຳເພງ, ຟ້ອນ ແລະ ແຫ່ຕົ້ນເງິນໄປພ້ອມໆກັນ; ໃນຕອນແລງຂອງມື້ທີສອງນີ້ຈະມີການເທດມະໄລໝື່ນມະໄລແສນ ທີ່ຈະເລົ່າເລື່ອງພະມາໄລເດີນທາງໄປທ່ອງທ່ຽວໃນສະຖານທີ່ຕ່າງໆ, ໃນກາງຄືນຂອງມື້ທີສອງນີ້ ຈະມີການແຫ່ເຂົ້າພັນກ້ອນ ເພື່ອເປັນການບູຊາກັນພະເວດທີ່ມີໜຶ່ງພັນຄາຖາສະເລ່ຍໄດ້ຄາຖາລະກ້ອນ, ຂັ້ນຕອນການແຫ່ເຂົ້າພັນກ້ອນ ແມ່ນແຕ່ລະບ້ານທີ່ມີສັດທາຈະປັ້ນເຂົ້າໜຽວໃຫ້ເປັນກ້ອນເທົ່າຫົວໂປ້ມື ຈົນໄດ້ເຂົ້າຄົບໜຶ່ງພັນກ້ອນແລ້ວກໍແຫ່ກັນມາແຕ່ບ້ານໃຜບ້ານມັນມາວັດ, ວົນອ້ອມສິມສາມຮອບແລ້ວ ກໍໄປຖອກກອງກັນໄວ້ທີ່ກະຕ່າກ້ອງທຸງໄຊແຕ່ລະທິດນັ້ນ; ໃນມື້ທີສາມຈະມີການແຫ່ຕົ້ນເງິນຕົ້ນຄຳເຂົ້າວັດອີກຮອບໜຶ່ງ ເອີ້ນວ່າການແຫ່ກັນຫຼອນ ສ່ວນທີ່ວັດກໍຈະມີການຕັ້ງໂຮງທານເພື່ອເປັນການປະຕິບັດບູຊາແກ່ພະເວດສັນດອນ ໃຜທີ່ແຫ່ກັນຫລອນມາຮອດແລ້ວ ກໍສາມາດມາເລືອກກິນອາຫານທີ່ໂຮງທານໄດ້ໂດຍບໍ່ເສຍຄ່າໃຊ້ຈ່າຍ; ນອກຈາກນີ້, ຫາກຊາວບ້ານຜ່ານມາແຖວນັ້ນ ຫຼື ຜູ້ຄົນທີ່ກາຍໄປກາຍມາທີ່ຕ້ອງການຈະມາຮ່ວມກິນຮ່ວມດື່ມທີ່ໂຮງທານກໍສາມາດເຮັດໄດ້ໂດຍບໍ່ເສຍຄ່າໃຊ້ຈ່າຍ.

ການຟັງເທດພະເວດສັນດອນນັ້ນ ນອກຈາກຈະເຮັດໃຫ້ໄປເກີດໃນຍຸກສະໄໝຂອງພະສີອາລະຍະເມດໄຕຕາມຄວາມເຊື່ອແລ້ວ ຍັງເປັນການປູກຈິດສຳນຶກໃຫ້ຜູ້ຟັງຮູ້ຈັກການໃຫ້, ຮູ້ຈັກການເສຍສະຫຼະ, ຮູ້ຈັກການເຫັນປະໂຫຍດສ່ວນລວມສຳຄັນກວ່າຜົນປະໂຫຍດສ່ວນຕົວ ດັ່ງທີ່ພະເວດສັນດອນໄດ້ເຮັດໄວ້ເປັນແບບເປັນຢ່າງ.




# ຈະຕຸລະວັນນະ

ຈະຕຸລະວັນນະ ໝາຍເຖິງສີ່ວັນນະ ຫລືສະກຸນໄດ້ແກ່ຊັ້ນສູງຄົນໃນອິນເດຍບູຮານຄື

1. ວັນນະຂາວ (ພິວຂາວ) ໄດ້ແກ່ພວກພາມເປັນຈຳພວກທີ່ປະກອບພິທີທາງສາສະໜາພາມ. ພວກນີ້ກືວ່າ ພວກຄົນເກີດຈາກປາກຂອງພະພົມຜູ້ສ້າງໂລກ (ພະພົມເປັນພະເຈົ້າຂອງສາສະໜາພາມຜູ້ທຳອິດ) ພວກພາມຈຶ່ງເປັນເຈົ້າຄຳພີທັງສາມ.

2. ວັນນະແດງ ໄດ້ແກ່ກະສັດ ເຊິ່ງເປັນພວກເຊື້ອເຈົ້າ. ມີໜ້າທີ່ຮັກສາບ້ານເມືອງ, ກະສັດກືວ່າ ພວກຕົນເກີດຈາກແຂນຂອງພະພົມ. ສະນັ້ນພາມ ກັບກະສັດ ຈຶ່ງເປັນພວກຊັ້ນສູງ.

3. ວັນນະເຫຼືອງ ໄດ້ແກ່ໄວສະຍະ ຫຼື ພວກແພດ. ພວກນີ້ ກໍກືວ່າຕົນເກີດຈາກຕັກຂອງພະພົມ (ພວກແພດ ແມ່ນພວກຂ້າລັດກະການນັກຮຽນຮູ້ປັນຍາຊົນ).

4. ວັນນະດຳ (ອິນເດຍພິວດຳ ຫລືເອີ້ນວ່າກາລີ ເຊັ່ນ ເຈົ້າແມ່ກາລີ ຫຼື ນາງ ອູມາ ເປັນພັນລະຍາຂອງພະຊີວະເທບ ຂອງຮິນດູ ພາມ). ພວກນີ້ ເປັນພວກຈ້າງ ຫລືທາຂໍທານ. ພວກສູດນີ້ ກືວ່າເກີດມາຈາກປາຍຕີນຂອງພະພົມ ຈຶ່ງເປັນຄົນຊັ້ນຕ່ຳ. ບໍ່ມີໂອກາດຈະໄດ້ສຶກສາຮ່ຳຮຽນ. ນີ້ແມ່ນການປາລົບອອກໃນຄຳພີພະເວດ (ຄຳພີພາມ) ຈຶ່ງຫ້າມບໍ່ໃຫ້ພວກສູດຮຽນຮູ້ໃນຄຳພີພະເວດໃດໆ

**"ຈະຕຸລະວັນນະ"** ເປັນພາສາບາລີພາສາຂອງຄົນອິນເດຍບູຮານທາງພາກໃຕ້.



# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ໄປສູ່ສຸຄະຕິ | ໄປສູ່ສຸຂະຕິ |
| ຮັກສາສຸຂະພາບ | ຮັກສາສຸຄະພາບ |
| ໄວ້ອາໄລ | ໄຫວ້ອາໄລ |
| ໄຫວ້ພະທາດ | ໄວ້ພະທາດ |
| ນ້ຳເຕື່ອ | ນ້ຳເຊື່ອ |
| ເຊື້ອເຊີງ | ເຕື້ອເຊີງ |
| ເທົ່າຊາຊາດເຊື້ອ | ແຊ່ຊາຊາດເຊື້ອ |
| ບໍ່ແຊ່ | ບໍ່ເທົ່າ |

# ເວລາທີ່ຄວນດື່ມນໍ້າ ເພື່ອຊ່ວຍຫຼຸດໄຂມັນ



## ສຸກສະບາຍຫາຍໂຣຄ



**1. ຫຼັງຈາກຕື່ນນອນ**

ຫຼັງຈາກທີ່ຮ່າງກາຍບໍ່ໄດ້ດື່ມນ້ຳພຽງພໍເລີຍໃນເວລານອນເກືອບ 6-8 ຊົ່ວໂມງ(ເວລານອນປົກກະຕິ), ຄວນດື່ມນ້ຳທັນທີຫຼັງຕື່ນນອນ ເພື່ອເຮັດໃຫ້ຮ່າງກາຍສົດຊື່ນ, ຕື່ນໂຕ, ຫຼຸດອາການວິນຫົວ, ມຶນໆ, ງົ່ງໆ ຍ້ອນຂາດນ້ຳເປັນເວລາດົນ ດັ່ງນັ້ນ, ຫຼັງຈາກຕື່ນນອນຄວນດື່ມຢ່າງໜ້ອຍ 1 ຈອກ (200 ຊີຊີ) ເພື່ອເພີ່ມນ້ຳ ແລະ ເຮັດໃຫ້ຮ່າງກາຍສົດຊື່ນ.

ຄຳແນະນຳສຳລັບການດື່ມນ້ຳຫຼັງຈາກຕື່ນນອນ ຄວນດື່ມນ້ຳທັນທີຫຼັງຈາກຕື່ນນອນໂດຍບໍ່ຕ້ອງຖູແຂ້ວ ເພາະເຊື້ອແບັກທີເລຍໃນປາກທີ່ເຮົາດື່ມໄປພ້ອມກັບນ້ຳ ຈະຊ່ວຍໃຫ້ການເຮັດວຽກຂອງລະບົບຍ່ອຍອາຫານດີຂຶ້ນເຊັ່ນດຽວກັນ.

**2. ໃນລະຫວ່າງ ຫຼື ຫຼັງຈາກການອອກກຳລັງກາຍ**

ການອອກກຳລັງກາຍເຮັດໃຫ້ຮ່າງກາຍສູນເສຍນ້ຳຜ່ານທາງເຫື່ອຫຼາຍກວ່າປົກກະຕິ ດັ່ງນັ້ນ, ຮ່າງກາຍບໍ່ຄວນຂາດນ້ຳທັງໃນເວລາທີ່ອອກກຳລັງກາຍ ຫຼື ຫຼັງຈາກອອກກຳລັງກາຍ ຄວນດື່ມນ້ຳເລັກນ້ອຍໃນລະຫວ່າງການອອກກຳລັງກາຍເປັນປະຈຳ ຢ່າປ່ອຍໃຫ້ຮ່າງກາຍຂາດນ້ຳຕະຫຼອດການອອກກຳລັງກາຍ ແຕ່ທ່ານບໍ່ຄວນດື່ມນ້ຳຈອກໃຫຍ່ ຫຼື ກິນໝົດຕຸກໃນບາດດຽວ ເນື່ອງຈາກວ່າມັນສາມາດເຮັດໃຫ້ເກີດອາການເຈັບສຽບໄດ້. ການດື່ມນ້ຳໃນລະຫວ່າງການອອກກຳລັງກາຍ ນອກຈາກຊ່ວຍປັບປຸງປະສິດທິພາບການອອກກຳລັງກາຍດີຂຶ້ນແລ້ວ ຍັງຊ່ວຍຫລຸດຜ່ອນຄວາມສ່ຽງຕໍ່ການເກີດອາການວິນຫົວ ແລະ ໜ້າມືດ ໃນລະຫວ່າງການອອກກຳລັງກາຍໄດ້ເຊັ່ນດຽວກັນ.

**3. ກ່ອນກິນອາຫານ**

ດື່ມນ້ຳກ່ອນອາຫານ 30 ນາທີ ຈະຊ່ວຍກະຕຸ້ນໃຫ້ຮ່າງກາຍຮູ້ວ່າ ກຳລັງຈະເລີ່ມກິນອາຫານ ເພື່ອເຮັດໃຫ້ລະບົບຍ່ອຍອາຫານພ້ອມທີ່ຈະເຮັດວຽກຢ່າງມີປະສິດທິພາບ ນອກນັ້ນ, ການດື່ມນ້ຳກ່ອນກິນອາຫານຍັງສາມາດເຮັດໃຫ້ເຮົາຮູ້ສຶກອີ່ມໄວ, ມີຄວາມຢາກອາຫານໜ້ອຍລົງ ສະນັ້ນ, ຈຶ່ງເປັນວິທີທີ່ດີສຳລັບຜູ້ທີ່ກຳລັງຫຼຸດນ້ຳໜັກ ແຕ່ບໍ່ຄວນດື່ມນ້ຳຫຼາຍກ່ອນທີ່ຈະກິນອາຫານ ເພາະອາດຈະເຮັດໃຫ້ເກີດອາການເຈັບສຽບກະເຈັບ.

**4. ກ່ອນທີ່ຈະອາບນ້ຳ**

ການດື່ມນ້ຳກ່ອນອາບນ້ຳ ເໝາະສຳລັບຄົນທີ່ມັກອາບນ້ຳອຸ່ນ ເນື່ອງຈາກການອາບນ້ຳອຸ່ນຈະເຮັດໃຫ້ເລືອດໄຫລຜ່ານຜິວຫນັງເພີ່ມຂຶ້ນ ແລະ ເລືອດທີ່ສົ່ງໄປສະໝອງໜ້ອຍລົງ ແລະ ອາດຈະມີຄວາມສ່ຽງຕໍ່ການເປັນວິນ ຫຼື ໜ້າມືດຈາກຄວາມດັນເລືອດຕ່ຳໄດ້ ເຊິ່ງອັນຕະລາຍຫຼາຍ ການດື່ມນ້ຳໜຶ່ງ ຫຼື ສອງຈອກກ່ອນທີ່ຈະອາບນ້ຳ ສາມາດຊ່ວຍຫຼຸດຄວາມສ່ຽງຄວາມດັນຫຼຸດລົງໃນເວລາອາບນ້ຳອຸ່ນ ເພື່ອປ້ອງກັນບໍ່ໃຫ້ເກີດອາການມືດໃນເວລາອາບນ້ຳ.

**5. ກ່ອນຈະໄປນອນ**

ການດື່ມນ້ຳກ່ອນນອນ ສາມາດຫຼຸດຄວາມສ່ຽງການຂາດນ້ຳໃນເວລານອນ ແຕ່ກ່ອນເຂົ້ານອນບໍ່ຄວນດື່ມນ້ຳຫຼາຍ ເພາະອາດຈະໄປລົບກວນຮ່າງກາຍທີ່ຕ້ອງລຸກຂຶ້ນໄປຖ່າຍເບົາໃນເວລານອນເລື້ອຍໆ ດັ່ງນັ້ນ ເຮົາຄວນດື່ມກ່ອນເຂົ້ານອນບໍ່ເກີນ 1 ຈອກ ຫຼື ຖ້າດື່ມນ້ຳພຽງ 1 ຈອກ ແລ້ວຍັງເຮັດໃຫ້ເຮົາລຸກຂຶ້ນຢ່ຽວກາງຄືນ ແນະນຳໃຫ້ດື່ມພຽງແຕ່ເຄິ່ງຈອກ.

**6. ເມື່ອຮູ້ສຶກບໍ່ສະບາຍ, ມີອາການໄຂ້**

ໃນຊ່ວງເວລາທີ່ເປັນໄຂ້, ບໍ່ສະບາຍ, ອຸນຫະພູມຮ່າງກາຍຈະສູງຂຶ້ນ ການດື່ມນ້ຳຊ່ວຍຫຼຸດອຸນຫະພູມຮ່າງກາຍ ແລະ ຂັບໄລ່ຄວາມຮ້ອນອອກທາງປັດສະວະ ເຮັດໃຫ້ອາການໄຂ້ຫາຍໄວ ແລະ ຍັງຊ່ວຍໃຫ້ລະບົບພູມຕ້ານທານຂອງຮ່າງກາຍເຮັດວຽກໄດ້ດີຂຶ້ນ; ແຕ່ທ່ານບໍ່ຄວນດື່ມນ້ຳທັງໝົດເທື່ອດຽວ ຄວນດື່ມເທື່ອລະໜ້ອຍ ແລະ ຫຼາຍເທື່ອ.

**7. ຮູ້ສຶກເມື່ອຍ**

ຖ້າຮູ້ສຶກອ່ອນເພຍ, ເມື່ອຍ, ເບື່ອ ແລະ ໂມໂຫງ່າຍ ອາດຈະເປັນສັນຍານຂອງອາການຂາດນ້ຳ ສະນັ້ນ, ການດື່ມນ້ຳ 1 ຈອກ ສາມາດຊ່ວຍຫຼຸດອາການເຫຼົ່ານີ້ໄດ້ ໂດຍການດື່ມນ້ຳໃຫ້ພຽງພໍກັບຄວາມຕ້ອງການຂອງຮ່າງກາຍໃນແຕ່ລະມື້ເປັນປະຈຳ ເພື່ອປ້ອງກັນບໍ່ໃຫ້ຮ່າງກາຍເຂົ້າສູ່ພາວະຂາດນ້ຳ ຄວນດື່ມນ້ຳປະມານ 2-3 ລິດ ແລະ ບໍ່ຄວນດື່ມນ້ຳໃນປະລິມານຫຼາຍໃນຄັ້ງດຽວ, ຄວນກິນຊ້າໆ ແລະ ດື່ມເລື້ອຍໆຕະຫຼອດມື້.

**8. ເມື່ອເບິ່ງແຍງຄົນເຈັບ ຫຼື ຕ້ອງຢູ່ໃນພື້ນທີ່ທີ່ເຕັມໄປດ້ວຍຄົນເຈັບ**

ບໍ່ເຊື່ອຕ້ອງເຊື່ອ ການດື່ມນ້ຳຊ່ວຍປົກປ້ອງຮ່າງກາຍ ຈາກການຕິດເຊື້ອຈາກຄົນເຈັບທີ່ຢູ່ອ້ອມຂ້າງ ເນື່ອງຈາກການດື່ມນ້ຳ ຊ່ວຍສົ່ງເສີມການເຮັດວຽກຂອງລະບົບພູມຕ້ານທານ. ນອກນັ້ນ, ການດື່ມນ້ຳເລື້ອຍໆ ໃນເວລາທີ່ຢູ່ກັບຄົນເຈັບ ຍັງຊ່ວຍຫຼຸດຄວາມກົດດັນ ແລະ ຄວາມອິດເມື່ອຍຈາກການດູແລຄົນເຈັບເຊັ່ນກັນ.




## ເບິ່ງຊ້າງໃຫ້ເບິ່ງອາຫານ ເບິ່ງລູກຫຼານໃຫ້ເບິ່ງຄົນລ້ຽງ

\# ໂດຍ: ໂອທອງ ຄຳອິນຊຸ

✻ ແມ່ນບໍ່ນໍທີ່ເວົ້າ
ບອກວ່າ ເປັນທຳນຽມ
ປາໃຫຍ່ກິນປານ້ອຍ
ຖືກບໍ່ເດພີ່ນ້ອງ

ກັນທົ່ວທັງນະຄອນ
ແຕ່ເດີມດາເຄົ້າ
ບູຮານເຮົາວ່າ
ລອງຄົ້ນເບິ່ງກັນ

✻ ຢ້ານບໍ່ເປັນຮີດໃຫ້
ປາໃຫຍ່ໂຕໃຈດີ
ປາຈອງທອງຫາຫຍ້ຳ
ລາງເທື່ອໂຕຮ່າງນ້ອຍ

ເຮົາເຊື່ອສະເໝີໄປ
ອາດມີເຕັມຫ້ອຍ
ກິນກັນກິນແຊບ
ໃຈຫ້ຽມໂຫດຜະຫຍອງ

✻ ມອງເບິ່ງ ຊຸມຊາດຊ້າງ
ຄືບໍ່ເຫັນມັນກິນ
ເຫັນແຕ່ ມັນກິນອ້ອຍ
ກິນແຕ່ພຽງຍອດໄມ້

ແນວໃຫຍ່ກາຍສູງ
ໝູ່ຄະນາແນວນ້ອຍ
ຮຽວບົງໃບໄຜ່
ພໍໃຫ້ຮ່າງສະຖຽນ

✻ ສ່ວນວ່າ ຊຸມຖ່ອຍແທ້
ຢ້ານວ່າ ເປັນເສືອສິງ
ບາງທີ ຄືຄຳເວົ້າ
ຕອນນີ້ ແປງປ່ຽນໃຫ້

ກິນເພື່ອນພົງຄະນາ
ໃຫຍ່ກະເທີນອາຍຊ້າງ
ມີມາຄາວກ່ອນ
ເຫັນແຈ້ງກວ່າເດີມ

✻ ຍິນວ່າ ໄຫໃຫຍ່ນັ້ນ
ສ່ວນວ່າໄຫກາງກາຍ
ບັດວ່າ ຊຸມໄຫນ້ອຍ
ຍາມຝົນລົ້ນໂຕ່ງໄດ້

ມັນວ່າງວາງເສີຍ
ປາກຈົນເຫຼືອລົ້ນ
ຮຽງກັນແກມເພີ່ນ
ພຽງໜ້ອຍບໍ່ເຕັມ ແມ່ນຢູ່ບໍ!



## ຫັກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

\# ສາວຈົ້ມ

✻ ***ກຸມ***ພາກຽມຜ່ານພົ້ນ ***ມີນາ***ຍ່ອງຍາມເຢືອນ ໃນເດືອນມີຫລາຍງານ ວຽກສຳຄັນຂອງຊາດ ***8 ມີນາ***ໂລກາກ້ອງ ກຽມສະຫລອງກັບເບືອງບັນທຶກ ***ທີ 22*** ແມ່ນມື້ ວັນ***ສ້າງຕັ້ງພັກ***ປະຊາ ທັງ ***21 ມີນາ***ພໍ່າພ້ອມ ບົ້ນຮົບໃຫຍ່ທີ່ຝັງໃຈ ອິລະກຳຫລວງຫລາຍ ໄພ່ປະຊາລາວຮູ້ ເປັນບົດຮຽນສອນໃຫ້ ຄົນຮຸ່ນຫລັງຕາມໄຕ່ ຈຳຝັງໃຈຮັບຮູ້ ສານສ້າງສືບໄປ ***ບັ້ນແລ້ວ!***

✻ ***ຕາດ***ເຍືອງ ເມືອງປາກຊ່ອງ ແຂວງຈຳປາສັກ ໄດ້ຮັບລາງວັນມາດຕະຖານການທ່ອງທ່ຽວ ປະຊາຊົນມີສ່ວນຮ່ວມອາຊຽນປີ ***2023-2025*** ແມ່ນ ***1/5 ເປົ້າໝາຍ*** ທີ່ໄດ້ຮັບການຮັບຮອງມາດຕະຖານການທ່ອງທ່ຽວ. ພິທີມອບ-ຮັບລາງວັນດັ່ງກ່າວ ຈັດຂຶ້ນໃນໂອກາດ***ມະຫະກຳການທ່ອງທ່ຽວອາຊຽນ ປະຈຳປີ 2023*** ທີ່ເມືອງຢ໋ອກຢາກາຕາ, ປະເທດອິນໂດເນເຊຍ ເມື່ອ***ວັນທີ 5*** ຜ່ານມາ ປະຊາຊົນຍົກຍ້ອງຍ່ຍື່ນຍິນດີ ຂໍໃຫ້ມີຫລາຍສະຖານ ທີ່ເບືອງບັນກ້ອງ ໂລກາເຫັນຍ່ຍ້ອງ ເດີນທາງຊົມທ່ຽວ ເສດຖະກິດດຸ່ງກ້າວ ຊາດລາວເຮືອງຮຸ່ງເຫລື້ອມ ເງິນເພີ້ຈຶ່ງຜ່ອນຜັນ ***ຊອບແລ້ວ!***

## ຊອບຍິ້ມ

\# ແອ່ນຕຸ້ງ



**ເລື່ອງ: ສາຍຕາສັ້ນ**

ມື້ໜຶ່ງທ້າວເສີກໄປຫາປີຕີ, ປີຕີສັງເກດເຫັນໃສ່ແວ່ນຕາ ເລີຍຖາມວ່າ:

- ດຽວນີ້ມຶງຄືໃສ່ແວ່ນຕາ
- ສາຍຕາສັ້ນ
- ວ້າວ!ໄປແຫກສາຍຕາມາແລ້ວຫວະ?
- ບໍ່,
- ຄືວ່າວັນທີດແລ້ວນີ້ ໄປຫລິ້ນເທັກເລີຍພາຜູ້ສາວໄປເຮືອນພັກ.
- ແລ້ວມັນກ່ຽວກັບຫຍັງກັບສາຍຕາ?
- ໄປຮອດເຮືອນພັກເຂົ້າຫ້ອງເປີດໄຟປຸບ ຈຶ່ງຮູ້ວ່າເປັນເມຍຂອງຕົນເອງ.
- !!!

### ຄະຕິເຕືອນໃຈ

\# ດອກສະຍອມ

ຄວາມດຸໝັ່ນ ປ່ຽນແປງໂຊກຊາຕາ
ຄວາມເມດຕາ ປ່ຽນແປງຊີວິດ




## ໜ້າໄຫວ້ຫຼັງຫຼອກ- ໜ້າເນື້ອໃຈເສືອ- ໜ້າພຣະໃຈມານ

"ໜ້າໄຫວ້ຫຼັງຫຼອກ", "ໜ້າເນື້ອໃຈເສືອ" ແລະ "ໜ້າພະໃຈມານ" ເປັນ 3 ສຳນວນທີ່ມີຄວາມໝາຍໃກ້ຄຽງກັນ ເຊິ່ງມີຄວາມໝາຍຄ້າຍຄືກັນ ດັ່ງນີ້:

"ໜ້າໄຫວ້ຫຼັງຫຼອກ" ເປັນສຳນວນ 4 ຄຳຊ້ອນກັນ ທີ່ປະກອບດ້ວຍຄຳວ່າ "ໜ້າ" ໝາຍເຖິງ "ສ່ວນດ້ານໜ້າຂອງຫົວ ແຕ່ໜ້າຜາກເຖິງຄາງ, ສ່ວນທີ່ກົງກັນຂ້າມກັບດ້ານຫຼັງ", "ໄຫວ້" ໝາຍເຖິງ "ຍໍມືນົບສະແດງຄວາມເຄົາລົບ", "ຫຼັງ" ໝາຍເຖິງ "ສ່ວນທີ່ກົງກັນຂ້າມກັບດ້ານໜ້າ" ແລະ "ຫຼອກ" ໝາຍເຖິງ "ເຮັດແລບລີ້ນປີ້ນຕາເພື່ອໃຫ້ຢ້ານ". ເມື່ອທັງສີ່ຄຳມາຊ້ອນໃສ່ກັນເປັນ "ໜ້າໄຫວ້ຫຼັງຫຼອກ" ຖ້າແປຕາມໂຕ ກໍໝາຍເຖິງ "ຢູ່ຕໍ່ໜ້າຍົກມືນົບ ບາດຍາມລັບຫຼັງໄປແລ້ວ ຜັດແລບລີ້ນປີ້ນຕາໃສ່". ຖ້າອະທິບາຍເນື້ອໃນຂອງສຳນວນນີ້ແລ້ວ ກໍໝາຍເຖິງ "ຢູ່ຕໍ່ໜ້າເຮັດເປັນເຄົາລົບນັບຖື ແຕ່ບາດຢູ່ລັບຫຼັງຜັດນິນທາວ່າຮ້າຍ" ເຊັ່ນ

- ຄົນຜູ້ນັ້ນເປັນຄົນໜ້າໄຫວ້ຫຼັງຫຼອກ ໃຜໆກໍຊັງໜັງໜ້າ ບໍ່ມີໃຜຢາກຄົບຄ້າສະມາຄົມນຳ.

"ໜ້າເນື້ອໃຈເສືອ" ເປັນສຳນວນ 4 ຄຳຊ້ອນກັນ ທີ່ປະກອບດ້ວຍຄຳວ່າ "ໜ້າ" ໝາຍເຖິງ "ສ່ວນດ້ານໜ້າຂອງຫົວແຕ່ໜ້າຜາກເຖິງຄາງ, ສ່ວນທີ່ກົງກັນຂ້າມກັບດ້ານຫຼັງ", "ເນື້ອ" ໝາຍເຖິງ "ສັດສີ່ຕີນຈຳນວນກວາງ, ຟານ", "ໃຈ" ໝາຍເຖິງ "ສິ່ງທີ່ເຮັດໜ້າທີ່ຮູ້ ຮູ້ສຶກ ນຶກຄິດ" ແລະ "ເສືອ" ໝາຍເຖິງ "ຊື່ສັດລ້ຽງລູກດ້ວຍນ້ຳນົມ ໃນວົງຕະກຸນດຽວກັບແມວ ແຕ່ໂຕໃຫຍ່ກວ່າຫຼາຍ". ເມື່ອທັງສີ່ຄຳມາຊ້ອນໃສ່ກັນເປັນ "ໜ້າເນື້ອໃຈເສືອ" ແປຕາມໂຕ ກໍໝາຍເຖິງ "ໃບໜ້າເປັນກວາງເປັນຟານ ແຕ່ຈິດໃຈເປັນເສືອ". ເມື່ອອະທິບາຍຄວາມໝາຍປຽບທຽບຂອງສຳນວນນີ້ແລ້ວ ກໍໝາຍເຖິງ "ການສະແດງອອກພາຍນອກ ແມ່ນເປັນຄົນດີມີສິລະທຳ ອ່ອນນ້ອມຖ່ອມຕົນ ແຕ່ວ່າຢູ່ພາຍໃນຈິດໃຈຊ້ຳຜັດໂຫດຮ້າຍອຳມະຫິດ ມີກົນອຸບາຍເລ່ລ່ຽມຫວັງທຳຮ້າຍຜູ້ອື່ນ ດັ່ງກັບເສືອທີ່ຫວັງຄຸບເອົາເນື້ອຫຼືກວາງຟານມາເປັນອາຫານ" ເຊັ່ນ

- ຊາຍຜູ້ນັ້ນເປັນຄົນໜ້າເນື້ອໃຈເສືອ ທຳທ່າເຮັດເປັນຄົນສຸພາບອ່ອນນ້ອມໃຈດີ ແຕ່ທີ່ແທ້ໃຈໂຫດປານເພັດຊະຄາດ ເພາະຫາລາຍແຕ່ຈະທຳຮ້າຍຜູ້ອື່ນໃຫ້ວາຍວອດ.

"ໜ້າພະໃຈມານ" ຄວາມໝາຍກໍຢາກຄ້າຍກັບ "ໜ້າເນື້ອໃນເສືອ". ໜ້າພະໃຈມານ ເປັນສຳນວນ 4 ຄຳຊ້ອນກັນທີ່ປະກອບດ້ວຍຄຳວ່າ "ໜ້າ" ໝາຍເຖິງ "ສ່ວນດ້ານໜ້າຂອງຫົວ ແຕ່ໜ້າຜາກເຖິງຄາງ, ສ່ວນທີ່ກົງກັນຂ້າມກັບດ້ານຫຼັງ", "ພະ" ໝາຍເຖິງ "ນັກບວດ, ພິກຂຸສົງ", "ໃຈ" ໝາຍເຖິງ "ສິ່ງທີ່ເຮັດໜ້າທີ່ຮູ້ ຮູ້ສຶກ ນຶກຄິດ" ແລະ "ມານ" ໝາຍເຖິງ "ຍັກ, ຜີສາດທີ່ມີໃຈບາບຫຍາບຊ້າ". ເມື່ອທັງສີ່ຄຳມາຊ້ອນໃສ່ກັນເປັນ "ໜ້າພະໃຈມານ" ກໍໝາຍເຖິງ "ບຸກຄົນຜູ້ສະແດງອອກພາຍນອກເປັນຄົນດີມີສິນທຳ ແຕ່ມີຈິດໃຈໂຫດຮ້າຍສາມານຫວັງທຳຮ້າຍໃຫ້ຜູ້ອື່ນຫຼົ້ມຈົມ". ເຊັ່ນ

- ຄົນຜູ້ນັ້ນ ເຊື່ອໃຈບໍ່ໄດ້ ເພາະເປັນຄົນໜ້າພະໃຈມານ ຢູ່ຕໍ່ໜ້າປານພະເທວດສັນດອນ ບາດແລ້ວລັບຫຼັງປານຍັກທົດສະກັນທີ່ຫວັງເຮັດໃຫ້ພະລາມລົ້ມຫາຍຕາຍຈາກ ເພື່ອຈະໄດ້ນາງສີດາມາເຊີຍຊົມ.

**# ຂໍ້ສັງເກດ:** ລາງເທື່ອ ປາກົດເຫັນບາງຄົນອອກສຽງສຳນວນ "ໜ້າໄຫວ້ຫຼັງຫຼອກ" ເປັນ "ໜ້າຫວ້າຍຫຼັງລອກ" ເຊິ່ງມີຄວາມໝາຍຕ່າງ. "ໜ້າຫວ້າຍຫຼັງລອກ" ໝາຍເຖິງ "ໜ້າທີ່ຖືກຜູ້ສາວຂູດຈົນໜ້າຫວ້າຍ ແລະ ຫຼັງກົ້ມລົງດຳນາບໍ່ໃສ່ເສື້ອຖືກແດດຈົນໜັງຢູ່ຫຼັງລອກອອກ". ສ່ວນ "ໜ້າເນື້ອໃຈເສືອ" ແລະ "ໜ້າພະໃຈມານ" ມີຄວາມໝາຍຄືກັນ ສາມາດໃຊ້ແທນກັນໄດ້.




# ສະພາສູງຟີລິບປິນ ໃຫ້ສັດຕະຍາບັນ ເຂົ້າຮ່ວມ RCEP ຢ່າງເປັນທາງການ




ມີການລາຍງານຂ່າວໃຫ້ຮູ້ວ່າ: ວັນທີ 21 ກຸມພານີ້, ສະພາສູງຟີລິບປິນ ໄດ້ໃຫ້ສັດຕະຍາບັນຕໍ່ໃບອະນຸຍາດເຂົ້າຮ່ວມສັນຍາການພົວພັນຄູ່ຮ່ວມເສດຖະກິດແບບຮອບດ້ານໃນພາກພື້ນ ຫຼື RCEP ຢ່າງເປັນທາງການ ເຊິ່ງເປັນການແກ້ໄຂອຸປະສັກສຸດທ້າຍໃຫ້ຟີລິບປິນທີ່ເຂົ້າຮ່ວມເຂດການຄ້າເສລີໃຫຍ່ກວ່າໝູ່ຢູ່ໃນໂລກ.

ຂັ້ນຕອນຕໍ່ໄປ, ຟີລິບປິນຈະຍື່ນໃບອະນຸຍາດສະບັບນີ້ໃຫ້ກອງເລຂາອາຊຽນ. RCEP ຈະມີຜົນບັງຄັບໃຊ້ຕໍ່ຟີລິບປິນຢ່າງເປັນທາງການຫຼັງຈາກຍື່ນໃບອະນຸຍາດແລ້ວ 60 ວັນ.

ທ່ານ ອາກເຊນີໂອ ບາລິຊາການ ຫົວໜ້າອົງການເສດຖະກິດ ແລະ ການພັດທະນາແຫ່ງຊາດຟີລິບປິນ ກ່າວວ່າ: ການເຂົ້າຮ່ວມ RCEP ຈະມີຜົນດີຕໍ່ຟີລິບປິນໃຫ້ສາມາດເຊື່ອມໂຍງເຂົ້າກັບຕ່ອງໂສ້ການສະໜອງໃນທົ່ວໂລກ, ເປີດກວ້າງຂອບເຂດເຂົ້າຕະຫຼາດ, ຜ່ານການຄ້າໃນພາກພື້ນ ແລະ ສາກົນ ແລະ ເພີ່ມທະວີການລົງທຶນຕໍ່ພາກສ່ວນຍຸດທະສາດ ເພື່ອຊຸກຍູ້ໃຫ້ເສດຖະກິດຟີລິບປິນເຕີບໂຕຢ່າງຕໍ່ເນື່ອງ.

# ສີລັງກາ ຂຶ້ນຄ່າໄຟຟ້າ 66% ຫວັງຈູງໃຈ IMF ປ່ອຍເງິນກູ້ງວດໃໝ່

*ລັດຖະບານສີລັງກາຂຶ້ນຄ່າໄຟຟ້າອີກ ໃນອັດຕາ 66% ເພື່ອຫວັງເພີ່ມຄວາມເພິ່ງພໍໃຈໃຫ້ກອງທຶນການເງິນສາກົນໃນການອະນຸມັດສິນເຊື່ອງວດໃໝ່.*

ອີງຕາມການລາຍງານຂ່າວວັນທີ 16 ກຸມພາ ໃຫ້ຮູ້ວ່າ: ກະຊວງພະລັງງານຂອງສີລັງກາ ໄດ້ອອກຖະແຫລງການເລື່ອງການປັບຂຶ້ນຄ່າໄຟຟ້າໃນອັດຕາ 66% ໂດຍບໍ່ໄດ້ລະບຸຢ່າງຈະແຈ້ງກ່ຽວກັບເພດານລາຄາ ແລະ ການກຳນົດໄລຍະລາຄາ, ແຕ່ມີການສະແດງຄວາມຫວັງວ່າ: ຈະສາມາດຫຼຸດລາຄາຄ່າໄຟຟ້າລົງໄດ້ ເມື່ອຮອດກຳນົດການປະເມີນສະຖານະການຄັ້ງຕໍ່ໄປໃນເດືອນກໍລະກົດທີ່ຈະມາເຖິງນີ້.

ສີລັງກາ ເຊິ່ງກຳລັງປະສົບວິກິດເສດຖະກິດຄັ້ງຮ້າຍແຮງທີ່ສຸດໃນປະຫວັດສາດຂອງປະເທດ ປັບຂຶ້ນຄ່າໄຟຟ້າເປັນຄັ້ງທຳອິດໃນຮອບ 9 ປີ ໃນເດືອນສິງຫາ 2021 ກຳນົດອັດຕາ 264% ໂດຍມີລາຍງານອີກວ່າ: ກ່ອນໜ້ານີ້ລັດຖະບານຕ້ອງການປັບເພີ່ມອັດຕາຄ່າໄຟຟ້າສູງເຖິງ 800% ແຕ່ຄະນະກຳມະການກວດສອບສາທາລະນູປະໂພກກຳນົດເພດານໄວ້ສູງສຸດ 264%.

ເຖິງຢ່າງໃດກໍຕາມ, ປະມານສອງໃນສາມຈາກ 7,8 ລ້ານຄອບຄົວໃນສີລັງກາ ເຊິ່ງໃຊ້ກະແສໄຟຟ້າໜ້ອຍກວ່າ90 ກິໂລວັດຕໍ່ເດືອນ ຈະຍັງໄດ້ຮັບຜົນກະທົບຈາກມາດຕະການຂຶ້ນຄ່າໄຟຟ້າຫລາຍທີ່ສຸດເນື່ອງຈາກຄ່າທຳນຽມຈະເພີ່ມແບບກ້າວກະໂດດ.

ຂະນະທີ່ລັດຖະບານເນັ້ນ "ຄວາມຈຳເປັນ" ຂອງມາດຕະການຫຼັງຢຸດນະໂຍບາຍອຸດໜູນຄ່າໄຟຟ້າ ແລະ ເພື່ອຊ່ວຍໃຫ້ໜ່ວຍງານທີ່ກ່ຽວຂ້ອງວາງແຜນກຳນົດຄ່າໄຟຟ້າໃນໄລຍະຍາວຕໍ່ໄປ.

ການເຄື່ອນໄຫວດັ່ງກ່າວຂອງສີລັງກາ ເປັນສ່ວນໜຶ່ງຕາມ "ເງື່ອນໄຂອັນເຄັ່ງຄັດ" ຂອງກອງທຶນການເງິນສາກົນ (IMF) ເພື່ອແລກນຳການປ່ອຍສິນເຊື່ອງວດໃໝ່ມູນຄ່າ 2.900 ລ້ານໂດລາສະຫະລັດ ຕາມທີ່ມີການບັນລຸຂໍ້ຕົກລົງຮ່ວມກັນໃນເດືອນກັນຍາປີຜ່ານມາ.

# ການປ່ຽນແປງສະພາບອາກາດ ອາດເຮັດໃຫ້ຍຸງແຜ່ເຊື້ອມາລາເຣຍງ່າຍຂຶ້ນ



ມີການລາຍງານໃຫ້ຮູ້ວ່າ ການວິໄຈຫຼ້າສຸດເປີດເຜີຍວ່າ: ເມື່ອອຸນຫະພູມສູງຂຶ້ນ ສິ່ງມີຊີວິດໃນເຂດຮ້ອນຫຼາຍຊະນິດ ລວມທັງຍຸງ ຈະອົບພະຍົບ ແລະ ເຄື່ອນຍ້າຍໄປບ່ອນຢູ່ອາໄສແຫ່ງໃໝ່ທີ່ໄກຈາກເສັ້ນສູນສູດໃນທະວີບອາຟຣິກາເພີ່ມຂຶ້ນ.

ໂດຍຂໍ້ມູນຈາກທີມວິໄຈຂອງມະຫາວິທະຍາໄລຈອດທາວ ນັບແຕ່ປີ 1898 ພົບວ່າ: ຍຸງທີ່ເປັນພາຫະຂອງເຊື້ອມາລາເຣຍໄດ້ເຄື່ອນຍ້າຍອອກຫ່າງຈາກເສັ້ນສູນສູດຂອງໂລກໂດຍສະເລ່ຍແລ້ວປະມານ 4,7 ກິໂລແມັດຕໍ່ປີໃນໄລຍະທົດສະວັດຜ່ານມາ ເຊິ່ງອາດມີສ່ວນເຮັດໃຫ້ເຊື້ອພະຍາດມາລາເຣຍສາມາດແຜ່ກະຈາຍໄປພື້ນທີ່ອື່ນໆທົ່ວໂລກໄດ້ງ່າຍຂຶ້ນ.

ທ່ານ ຄໍລິນ ຄາລສັນ ນັກຊີວະວິທະຍາແຫ່ງຈອນທາວ ແລະ ຜູ້ນຳສະເໜີການວິໄຈຫຼ້າສຸດນີ້ ລະບຸວ່າ: ທ່ານຍັງຕ້ອງການຂໍ້ມູນອີກຫລາຍຢ່າງທີ່ຈະມາຊ່ວຍຢືນຢັນເຖິງການຂອງຍຸງ, ມາລາເຣຍ ແລະ ອຸນຫະພູມທີ່ສູງຂຶ້ນ ໂດຍຜົນກະທົບຮ້າຍແຮງທີ່ສຸດຂອງການປ່ຽນແປງສະພາບອາກາດອາດບໍ່ໄດ້ມາຈາກນ້ຳຖ້ວມ, ໄພແຫ້ງແລ້ງ ແລະ ໄພພິບັດອື່ນໆເທົ່ານັ້ນ. ຈາກຂໍ້ມູນຂອງນັກວິທະຍາສາດດ້ານສະພາບອາກາດຂອງສະຫະປະຊາຊາດຊີ້ວ່າ: ບາງຜົນໄດ້ຮັບຮ້າຍແຮງທີ່ສຸດອາດມາຈາກໂຣກໄພໄຂ້ເຈັບ.

ພະຍາດມາລາເຣຍນັ້ນ ຖືເປັນພຽງບໍ່ເທົ່າໃດພະຍາດຮ້າຍທີ່ຄຸກຄາມມະນຸດຢ່າງຍາວນານ ໂດຍເຊື້ອມາລາເຣຍເປັນເຊື້ອພະຍາດທີ່ມີມາແຕ່ຍຸກດຶກດຳບັນ ແລະ ຖືເປັນໜຶ່ງໃນພະຍາດຮ້າຍແຮງທີ່ສຸດໃນໂລກ ເຊິ່ງຂ້າຊີວິດຄົນໄປແລ້ວ 600.000 ກວ່າຄົນຕໍ່ປີ.

ນັບແຕ່ການປະຕິວັດອຸດສາຫະກຳເປັນຕົ້ນມາ ມະນຸດໄດ້ມີສ່ວນເຮັດໃຫ້ໂລກຮ້ອນຂຶ້ນບວກກັບການປ່ຽນແປງຂອງສະພາບອາກາດ ເຊິ່ງສົ່ງຜົນຕໍ່ການປ່ຽນແປງທີ່ຢູ່ອາໄສຂອງສິ່ງມີຊີວິດ ແລະ ຊຸກຍູ້ໃຫ້ພືດແລະ ສັດຕ້ອງຍ້າຍຖິ່ນຖານໄປສະຖານທີ່ໃໝ່ ສົ່ງຜົນໃຫ້ເຊື້ອພະຍາດຕ່າງໆ ເຄື່ອນຍ້າຍໄປສະຖານທີ່ອື່ນໆເຊັ່ນດຽວກັນ ຖືເປັນໜຶ່ງໃນຜົນກະທົບຈາກການປ່ຽນແປງຂອງສະພາບອາກາດທີ່ຫລາຍໆຄົນມັກຄາດບໍ່ເຖິງ.

ນອກຈາກນີ້, ການແຜ່ກະຈາຍຂອງຍຸງໄປຖິ່ນຖານຕ່າງໆນັ້ນ ຍັງສົ່ງຜົນກະທົບຕໍ່ສິ່ງມີຊີວິດອື່ນໆຈຳນວນຫຼາຍບໍ່ພຽງແຕ່ມະນຸດເທົ່ານັ້ນ ຍົກຕົວຢ່າງ ນົກພື້ນຖິ່ນຂອງຮາວາຍທີ່ຈຳເປັນຕ້ອງອົບພະຍົບຂຶ້ນສູ່ພື້ນທີ່ສູງ ເນື່ອງຈາກຖືກພະຍາດມາລາເຣຍໃນສັດປີກຄຸກຄາມ, ແຕ່ເມື່ອອຸນຫະພູມສູງຂຶ້ນ ນັກວິທະຍາສາດຄາດຄະເນວ່າ: ຍຸງຈະແຜ່ພັນຂຶ້ນທີ່ສູງເຊັ່ນດຽວກັນ ເຮັດໃຫ້ນົກເຫຼົ່ານີ້ອາດຈະບໍ່ມີບ່ອນຢູ່ອາໄສ.

ເຖິງຢ່າງໃດກໍຕາມ, ການຄົ້ນພົບຂໍ້ມູນເຫຼົ່ານີ້ໃນໄລຍະເວລາຕົ້ນໆ ບໍ່ໄດ້ເປັນນິມິດໝາຍທີ່ດີສຳລັບການຕໍ່ສູ້ກັບພະຍາດມາລາເຣຍເທົ່າໃດ ເນື່ອງຈາກປັດຈຸບັນ ບັນດາລັດຖະບານ ແລະ ອົງກອນຜູ້ໃຈບຸນຈຳນວນບໍ່ໜ້ອຍຕ່າງມຸ່ງໃຊ້ເງິນທຶນຫລາຍພັນລ້ານໂດລາຕໍ່ປີໄປກັບມຸ້ງ, ຢາຂ້າແມງໄມ້ ແລະ ຢາເພື່ອປ້ອງກັນການຕິດເຊື້ອໄຂ້ມາຄວິນນິນລາເຣຍ ແລະ ອາການຂ້າງຄຽງອື່ນໆ, ແຕ່ຍັງຂາດເງິນທຶນສຳລັບເປົ້າໝາຍໃນການຮັບມືຕໍ່ພະຍາດດັ່ງກ່າວໃນລະດັບສາກົນອີກຈຳນວນຫຼາຍ.

ວິເສດ ສະແຫວງສຶກສາ

# ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ຍິງ

ອີກບໍ່ດົນວັນແມ່ຍິງສາກົນ ກໍຈະວຽນມາຮອດຈອດເຖິງ, ເປັນວັນທີ່ວົງຄະນະຍາດສາກົນ ພາກັນສະເຫຼີມສະຫຼອງດ້ວຍຫຼາຍຮູບການ ແຕ່ມີເປົ້າໝາຍໜຶ່ງດຽວນັ້ນຄື ເພື່ອຄວາມສະເໝີພາບຢ່າງແທ້ຈິງລະຫວ່າງຍິງ-ຊາຍ ບໍ່ວ່າຈະເປັນທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມ, ສະກັດກັ້ນທຸກຮູບການຈຳແນກ ແລະ ການໃຊ້ຄວາມຮຸນແຮງຕໍ່ເພດຍິງ. ດັ່ງນັ້ນ ໃນບົດຄວາມປະຈຳວັນນີ້ ຜູ້ຂຽນຈຶ່ງໄດ້ສັນຫາມາເລົ່າບາງເລື່ອງທີ່ພົວພັນກັບສິດທິຂອງແມ່ຍິງຢູ່ຫຼາຍປະເທດ ໂດຍຂໍເລີ່ມຈາກເຫດການຢູ່ປະເທດເນປານກ່ອນ ຂ່າວຈາກໜັງສືພິມວຽງຈັນທາມ ສະບັບປະຈຳວັນທີ 11 ສິງຫາ 2017 ໄດ້ໃຫ້ຮູ້ວ່າ ລັດຖະສະພາປະເທດເນປານ ໄດ້ລົງມະຕິຢ່າງເປັນເອກະສັນຮັບຮອງເອົາກົດໝາຍສະບັບໃໝ່ທີ່ກຳນົດໃຫ້ປະເພນີ “ຈາວປາດີ” (Chaupadi) ເປັນການກະທຳທີ່ຜິດກົດໝາຍ, ປະເພນີທີ່ສຸດລ້າຫຼັງທີ່ປະຕິບັດກັນມາໄດ້ຫຼາຍໆເຊັ່ນຄືນນີ້ ບັງຄັບໃຫ້ແມ່ຍິງທີ່ມີຮອບເດືອນ ຫຼື ຫຼັງຄອດລູກຕ້ອງອອກຈາກເຮືອນໄປຢູ່ຄອກສັດ ເພື່ອສະເດາະເຄາະເຂັນ ບໍ່ດັ່ງນັ້ນ ຄົນໃນຄອບຄົວຈະມີອັນເປັນໄປໃນທາງບໍ່ດີ, ແຕ່ການໄປຢູ່ປົນກັບສັດນັ້ນ ມັນສຸດແສນອັນຕະລາຍ; ນອກຈາກຄວາມສົກກະປົກ ຍັງສ່ຽງຈະຖືກສັດທຳຮ້າຍອີກດ້ວຍ. ໃນເດືອນກໍລະກົດ 2017 ກ່ອນມີການຮັບຮອງເອົາກົດໝາຍຍົກເລີກປະເພນີ “ຈາວປາດີ” ນີ້ກໍໄດ້ ເຫດການແສນເສົ້າເກີດຂຶ້ນຄືຍິງໃນໄວສາວຄົນໜຶ່ງຖືກງູຜິດກັດຕາຍຢູ່ຄອກສັດເມື່ອນາງເຮັດພິທີເສຍເຄາະ ຍ້ອນມີຮອບເດືອນ ກົດໝາຍສະບັບໃໝ່ທີ່ວ່ານີ້ໄດ້ກຳນົດຂໍ້ຫ້າມໄວ້ວ່າ ຜູ້ທີ່ບັງຄັບໃຫ້ແມ່ຍິງມີຮອບເດືອນ ຫຼື ເກີດລູກໃໝ່ໜີອອກຈາກເຮືອນໄປຢູ່ຄອກສັດນັ້ນ ຈະໄດ້ຮັບໂທດຈຳຄຸກສູງສຸດ 3 ເດືອນ ຫຼືຖືປັບໃໝເປັນເງິນ 3.000 ຮູປີ (ສະກຸນເງິນເນປານ) ຫຼືທັງຕິດຄຸກທັງເສຍເງິນປັບໃໝ. ຂ່າວໃຫ້ລາຍລະອຽດຕື່ມວ່າເມື່ອປະມານ 10 ປີ ກ່ອນໜ້າມີການຮັບຮອງເອົາກົດໝາຍສະບັບນີ້, ທາງສານສູງສຸດຂອງເນປານ ກໍເຄີຍໄດ້ຕັດສິນໃຫ້ປະເພນີ “ຈາວປາດີ” ເປັນການກະທຳທີ່ຜິດກົດໝາຍ ແຕ່ສຸດທ້າຍກໍບໍ່ສາມາດລຶບລ້າງປະເພນີລ້າຫຼັງນີ້ໄດ້ ຍ້ອນວ່າມັນຂາດຄວາມສັກສິດໃນລັກສະນະກົດໝາຍ. ອີກຂ່າວໜຶ່ງກໍເກີດຂຶ້ນໃນໄລຍະໄລ່ເລ່ຍກັບ ເລື່ອງຢູ່ເນປານ ນັ້ນກໍຄືລັດຖະສະພາປະເທດ ສ.ເກົາຫຼີ ໄດ້ຮັບຮອງເອົາກົດໝາຍອາຍາສະບັບປັບປຸງໃນເດືອນທັນວາ 2017. ກົດໝາຍອາຍາສະບັບເກົ່າໃນປີ 2011 ນັ້ນ ໄດ້ກຳນົດໂທດເຮັດໝັນ ຫຼື ຕອນທາງເຄມີຕໍ່ຜູ້ຊາຍທີ່ກໍເຫດຂົ່ມຂືນຜືນໃຈແມ່ຍິງ ສ່ວນກົດໝາຍສະບັບປັບປຸງນີ້ ໄດ້ກຳນົດໂທດເພີ່ມຂຶ້ນຕື່ມຄື ຜູ້ມີໂທດຂົ່ມຂືນ ຫຼື ພະຍາຍາມຂົ່ມຂືນ ກໍຈະຖືກຕອນທາງເຄມີເຊັ່ນກັນ. ເພື່ອໃຫ້ຜູ້ກ່ຽວໝົດສະມັດຕະພາບທາງເພດ ຫຼື ເວົ້າຕາມພາສາຊາວບ້ານ ກໍຄືເຮັດໃຫ້ ນົກເຂົາບໍ່ຂັນ ຫັ້ນລະ.



ກົດໝາຍອາຍາທັງສະບັບປີ 2011 ແລະ ສະບັບປັບປຸງປີ 2017 ນັ້ນ ລ້ວນແຕ່ໃຫ້ຄຳນິຍາມ “ຜູ້ຂົ່ມຂືນ” ວ່າເປັນເພດຊາຍເທົ່ານັ້ນ. ເລື່ອງການກຳນົດໂທດຕອນທາງເຄມີນີ້ ມີການປະຕິບັດກັນຢູ່ປະເທດຈຳນວນໜຶ່ງຢູ່ໃນອາຊຽນຂອງພວກເຮົານີ້, ອິນໂດເນເຊຍ ແມ່ນປະເທດໜຶ່ງທີ່ ໄດ້ກຳນົດໂທດຕອນທາງເຄມີຕໍ່ຜູ້ຂົ່ມຂືນເຫຍື່ອໃນໄວເດັກ ແລະ ຜູ້ທີ່ກໍຄະດີຂົ່ມຂືນແບບບໍ່ເຂັດບໍ່ຫຼາບ ແຕ່ບໍ່ມີໂທດເຖິງຂັ້ນຖືກຕອນທາງເຄມີນັ້ນ, ເມື່ອຜູ້ກ່ຽວພົ້ນໂທດຈາກການຕິດຄຸກແລ້ວ, ທາງການອິນໂດເນເຊຍ ຍັງມີສິດຝັງເຄື່ອງຈັບສັນຍານທີ່ເອີ້ນວ່າ “ຈິບ” (Chip) ໄວ້ໃນຮ່າງກາຍຜູ້ກໍາທຳຜິດຕື່ມອີກ ເພື່ອໃຫ້ທາງການສາມາດຈັບສັນຍານໄດ້ໃນກໍລະນີຜູ້ກ່ຽວຈະກໍ່ເຫດຊໍ້າຮອຍອີກ. ຂໍກ່ຽວມາ ສ.ເກົາຫຼີ ຕື່ມຄືນ ສຳລັບການຕາງທາງເຄມີເຮັດດ້ວຍການສີດຢາໃຫ້ໝົດສະມັດຕະພາບໃນເວລາຈຳກັດຄັກແນ່, ເມື່ອໝົດກຳນົດດັ່ງກ່າວ, ຜູ້ກ່ຽວກໍຈະສາມາດຟື້ນຄືນສະມັດຕະພາບທາງເພດ ແລະ ກໍແມ່ນຈຸດນີ້ເອງທີ່ກໍ່ໃຫ້ມີສຽງວິພາກວິຈານໃນສັງຄົມ ສ.ເກົາຫຼີ ສ່ວນໜຶ່ງ ທີ່ຕ້ອງການໃຫ້ຜູ້ກະທຳຜິດໝົດສະມັດຕະພາບທາງເພດຕະຫຼອດຊີວິດ ເພາະຢ້ານວ່າ ເມື່ອຜູ້ກ່ຽວມີກຳລັງວັງຊາດ່ອງໆ ກໍອາດໄປກໍ່ເຫດຊໍ້າຮອຍອີກ. ສ່ວນຂ່າວປິດທ້າຍບົດນີ້ ເປັນເລື່ອງດີຄືຫວ່າງບໍ່ດົນມານີ້ທາງການ ສປ.ຈີນ ໄດ້ອອກກົດໝາຍສະໜັບສະໜູນໃຫ້ບັນດາແມ່ຍິງໂສດເຂົ້າເຖິງເຕັກໂນໂລຊີສະໄໝໃໝ່ ຊ່ວຍໃຫ້ມີລູກໄດ້ໂດຍບໍ່ຈຳເປັນແຕ່ງດອງ ເພື່ອໃຫ້ມີລູກຕາມຄວາມຕ້ອງການ ວ່າກັນວ່າ ນະໂຍບາຍນີ້ແມ່ນເພື່ອສົ່ງເສີມການເກີດຂອງເດັກໃຫ້ຫຼາຍຂຶ້ນນັ້ນເອງ.



## ແຮໄວ້ຈ່າຍຍາມເຖົ້າ

\# ບ່າວກະບື

ໂຈນຄົນໜຶ່ງ ເອົາປືນສັ້ນຈໍ້ໃສ່ໜ້າຜາກທ້າວແດງ ພ້ອມກັບຖາມອອກມາວ່າ:

“ມຶງຊິໃຫ້ກູລ້ານກີບ ຫຼືວ່າມຶງຢາກຕາຍ?”

ທ້າວແດງຕອບສຽງເຢັນໆອອກມາວ່າ:

“ຂໍຕາຍດີກວ່າ ເພາະກູຕ້ອງການແຮເງິນນີ້ໄວ້ຈ່າຍ ຍາມກູເຖົ້າ”

## MONEY FOR OLD AGE

\# BAOKBU

A gangster held a pistol to Daeng’s forehead and asked, “Will you give me one million kip or would you prefer to die?” Daeng answered calmly, “I prefer to die as I want to keep my money for my old age.”

ກາຕູນ



## ທາງຄົນຍ່າງ ບໍ່ໄດ້ມີໄວ້ເປີດກິດຈະການ

● ໂດຍ : ພູຜາ




**ຜູ້ຊີ້ນຳ :**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຄະນະບັນນາທິການ :**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ຂັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

**ກອງບັນນາທິການ :**
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ຫອມສະນິດ
ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :**
ທ່ານ ຄຳຫວັນ ດາລາວົງ
ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ